# ກົມພາສີ

## ແຜນພັດທະນາຂອງຂະແໜງພາສີ
## ຮອດປີ 2020

ນະຄອນຫລວງວຽງຈັນ, ເດືອນ ກໍລະກົດ 2019

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===00000===----

ກະຊວງການເງິນ ເລກທີ:...................../ກງ

ນະຄອນຫຼວງວຽງຈັນ, ວັນທີ:............................

**ຂໍ້ຕົກລົງ**

**ວ່າດ້ວຍ ການຮັບຮອງແຜນພັດທະນາຂອງຂະແໜງພາສີ**

**ຮອດປີ 2020**

– ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017;

– ອີງຕາມ ກົດໝາຍ ວ່າດ້ວຍພາສີ, ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ປັບປຸງບາງມາດຕາ, ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;

– ອີງຕາມດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 204/ນຍ, ລົງວັນທີ 04 ກໍລະກົດ 2017 ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາການເງິນ ແຫ່ງລັດ ຮອດປີ 2025.

– ອີງຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມພາສີ, ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017.

**ລັດຖະມົນຕີກະຊວງການເງິນ ຕົກລົງ:**

**ມາດຕາ 1:** ເຫັນດີຮັບຮອງແຜນພັດທະນາວຽກງານພາສີ ຂອງຂະແໜງພາສີ ຮອດປີ 2020.

**ມາດຕາ 2:** ມອບໃຫ້ ກົມພາສີ ດຳເນີນການສ້າງແຜນລະອຽດ ເພື່ອຜັນຂະຫຍາຍການຈັດຕັ້ງປະຕິບັດແຜນພັດທະນາ ຂອງຂະແໜງພາສີ ຮອດປີ 2020 ໂດຍມີການກຳນົດເວລາປະຕິບັດແຕ່ລະໜ້າວຽກລະອຽດ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ຄະນະນຳກະຊວງການເງິນ ຮັບຊາບແຕ່ລະໄລຍະ.

**ມາດຕາ 3:** ມອບໃຫ້ ກົມພາສີ, ກະຊວງການເງິນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້,ໃຫ້ການຮ່ວມມື ແລະພ້ອມກັນຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ.

**ມາດຕາ 4:** ແຜນພັດທະນາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮອງນາຍົກລັດຖະມົນຕີ**

**ລັດຖະມົນຕີກະຊວງການເງິນ**

# ຄຳນຳ

ຈຸດປະສົງຂອງການສ້າງ ແຜນພັດທະນາຂອງຂະແໜງພາສີ ຮອດປີ 2020 ສະບັບນີ້ ແມ່ນ ເພື່ອເປັນບ່ອນອີງໃນການກຳນົດທິດທາງ ການພັດທະນາຂະແໜງພາສີ ໃຫ້ມີຄວາມເຂັ້ມແຂງ ແລະ ເຕີບໃຫຍ່ ໂດຍສະເພາະແນໃສ່ ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງການຈັດເກັບລາຍຮັບ ໃຫ້ມີປະສິດທິຜົນ, ການຄົ້ນຫາແຫຼ່ງລາຍຮັບພາຍໃນທີ່ບົ່ມຊ້ອນ, ການຫັນພາສີເປັນທັນສະໄໝ, ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງຊາດ ແລະ ສາມາດເຊື່ອມໂຍງກັບສາກົນ, ແນໃສ່ຜັນຂະຫຍາຍການຈັດຕັ້ງປະຕິບັດ ວິໄສທັດ ຮອດປີ 2030 ແລະ ຍຸດທະສາດພັດທະນາການເງິນແຫ່ງລັດ ຮອດປີ 2025 ໃຫ້ບັນລຸຕາມຄາດໝາຍ, ໂດຍສະເພາະແມ່ນຄາດໝາຍສູ້ຊົນດ້ານມະຫາພາກ ຮອດປີ 2020 ໃຫ້ສາມາດປະຕິບັດລາຍຮັບງົບປະມານທັງໝົດຢູ່ລະຫວ່າງ 17-18% ຂອງ GDP. ນອກຈາກນີ້, ຍັງແນໃສ່ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IX ແລະ X ຂອງພັກ ແລະ ການຈັດຕັ້ງປະຕິບັດ ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຮອດປີ 2025.

**ຄາດໝາຍສູ້ຊົນ ຮອດປີ 2020 ຂອງຂະແໜງພາສີ ແມ່ນແນໃສ່:**

- ປັບປຸງ ການບໍລິຫານອົງກອນ ໃຫ້ມີສັກກະຍະພາບ ຫລຸດຜ່ອນຂອດຂັ້ນການບໍລິຫານພາຍໃນອົງກອນ, ຄຸ້ມຄອງ ແລະ ພັດທະນາ ບຸກຄະລາກອນຂອງຂະແໜງພາສີ ໃຫ້ ມີຈັນຍາບັນ ຈັນຍາທຳ, ມີຄວາມຮູ້ຄວາມສາມາດ ດ້ານວິຊາສະເພາະພາສີ ໃນລະດັບທີ່ແນ່ນອນ ແລະ ກ້າວໄປເຖິງມີຄວາມຊຳນານງານ ແລະ ເປັນມືອາຊີບ ດ້ານວິຊາສະເພາະພາສີ, ຄາດໝາຍສ້າງໃຫ້ໄດ້ ຜູ້ຊຳນານງານສະເພາະດ້ານ ຢ່າງໜ້ອຍ 1-2 ຄົນ.

- ຫັນວຽກງານພາສີເປັນທັນສະໄໝ ໂດຍການຫລຸດຜ່ອນ ບັນດາຂັ້ນຕອນວຽກງານວິຊາສະເພາະ ທີ່ມີຄວາມຊໍ້າຊ້ອນ ແລະ ບໍ່ຈຳເປັນ, ເພີ່ມທະວີການນຳໃຊ້ເຄື່ອງມືທີ່ທັນສະໄໝ ໃນການຕິດຕາມຄຸ້ມຄອງ ການນຳເຂົ້າ-ສົ່ງອອກ, ການບໍລິການຂອງຂະແໜງພາສີ ແລະ ການຄຸ້ມຄອງຖານຂໍ້ມູນໃຫ້ມີຄວາມເປັນລະບົບເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ເພື່ອອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ ໂດຍສະເພາະເນັ້ນໜັກ ການຫລຸດຜ່ອນດ້ານໄລຍະເວລາ ໃນການກວດປ່ອຍ ແລະ ຕົ້ນທຶນທາງການຄ້າ. ຄາດຄະເນໃຫ້ສາມາດຫລຸດຜ່ອນໄລຍະເວລາ ໃນການກວດປ່ອຍສິນຄ້າໃຫ້ໄດ້ 10% ຕໍ່ປີ.

- ເພີ່ມທະວີ ການຮ່ວມມື ທັງພາຍໃນ ແລະ ຕ່າງປະເທດ ໂດຍເນັ້ນໜັກ ການປະສານ ສົມທົບ ກັບຂະແໜງການພາກລັດທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ, ແລະ ພາກທຸລະກິດ ພາຍໃນປະເທດ ເພື່ອສ້າງເງື່ອນໄຂໃຫ້ ກົດໝາຍ ແລະ ລະບຽບການ ຂະແໜງພາສີ ຖືກຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ມີລັກສະນະກົມກຽວ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ. ພ້ອມທັງ, ເອົາໃຈສົ່ງເສີມ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງມີຈຸດສຸມ, ຄາດໝາຍພາຍໃນ ປີ 2020 ແມ່ນໃຫ້ສາມາດຜັນຂະຫຍາຍ ບັນດາພັນທະ ທີ່ສປປ ລາວ ໄດ້ຮ່ວມລົງນາມເປັນພາຄີ ໃຫ້ມີຄວາມຄືບໜ້າເປັນຮູບປະທຳ, ເປັນຕົ້ນແມ່ນເນັ້ນໜັກວຽກງານ ທີ່ຕິດພັນກັບ ການຂົນສົ່ງສິນຄ້າຜ່ານແດນອາຊຽນ (AFAFGIT), ການຂົນສົ່ງຜ່ານແດນ ຂອງອະນຸພາກພື້ນລຸ່ມແມ່ນໍ້າຂອງ (GMS CBTA), ການປັບປຸງລະບຽບການແຈ້ງພາສີ ໃຫ້ສອດຄ່ອງກັບມາດຕະຖານຂອງອົງການພາສີໂລກ (WCO RKC), ການອຳນວຍຄວາມສະດວກດ້ານການຄ້າຂອງອົງການການຄ້າໂລກ, ການເຊື່ອມໂຍງກັບລະບົບແຈ້ງພາສີປະຕູດຽວອາຊຽນ (ASW) ແລະ ການຈັດຕັ້ງປະຕິບັດແຜນງານ ຜູ້ປະກອບການ ມາດຕະຖານ ເອອີໂອ(AEO).

- ປັບປຸງ, ສ້າງ ນິຕິກຳຂອງຂະແໜງການພາສີ ໃຫ້ມີລັກສະນະຄົບຊຸດ ສອດຄ່ອງກັບພາກພື້ນ ແລະສາກົນ. ພ້ອມທັງຮັບປະກັນການປະຕິບັດມາດຕະການບັງຄັບໃຊ້ກົດໝາຍ ໃຫ້ມີຄວາມສັກສິດ, ຍຸດຕິທຳ ແລະ ໂປ່ງໃສ ແນໃສ່ສ້າງເງື່ອນໄຂໃນການຈັດເກັບລາຍຮັບຂອງຂະແໜງພາສີ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ເພີ່ມຂຶ້ນ ຕາມຕົວເລກຄາດໝາຍແຜນການ ທີ່ກະຊວງການເງິນວາງໃຫ້ໃນແຕ່ລະໄລຍະ ແລະ ປະກອບສ່ວນ ປົກປ້ອງ ຄວາມປອດໄພຂອງສັງຄົມ.

ສະນັ້ນ, ເພື່ອໃຫ້ສອດຄ່ອງກັບເປົ້າໝາຍຂອງກະຊວງການເງິນ, ແຜນພັດທະນາວຽກງານພາສີ ສໍາລັບ ປີ 2020 ສະບັບນີ້ ແມ່ນສຸມໃສ່ 4 ແຜນງານຕົ້ນຕໍຄື:

1. ການປັບປຸງ ການຄຸ້ມຄອງ ແລະ ການບໍລິຫານອົງກອນ ໃຫ້ທັນສະໄໝ ພ້ອມທັງ ພັດທະນາ ບຸກຄະລາກອນຂອງຂະແໜງພາສີ ໃຫ້ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ມີຈັນຍາບັນ ຈັນຍາທໍາ, ແລະ ມີຄວາມຮູ້ຄວາມສາມາດດານວິຊາສະເພາະພາສີ ໃນລະດັບທີ່ແນ່ນອນ ກ້າວໄປເຖິງ ມີຄວາມຊໍານານງານ ແລະ ເປັນມືອາຊີບ ດ້ານວິຊາສະເພາະ;

2. ການຫັນພາສີເປັນທັນສະໄໝ ຢ່າງເປັນລະບົບຄົບຊຸດ ເພື່ອຍົກສູງການຄຸ້ມຄອງຂະແໜງການພາສີ ໃຫ້ມີສັກກະຍະພາບ ແລະ ຮັບປະກັນປະສິດທິຜົນ ໃນຂອບເຂດທົ່ວປະເທດ;

3. ການຮ່ວມມືພາຍໃນ ແລະ ຕ່າງປະເທດ ໃນລັກສະນະແບບມີຈຸດສຸມ ແນໃສ່ເພື່ອເຮັດໃຫ້ກົດໝາຍ ແລະ ລະບຽບການພາສີ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີລັກສະນະກົມກຽວ ກັບຂະແໜງການອື່ນໆ;

4. ການສ້າງ, ປັບປຸງ ນິຕິກໍາ ຂອງຂະແໜງການພາສີ ໃຫ້ມີລັກສະນະຄົບຊຸດ, ສອດຄ່ອງກັບພາກພື້ນ ແລະ ສາກົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຮັບປະກັນຄວາມເຂັ້ມແຂງໃຫ້ແກ່ການປະຕິບັດມາດຕະການ ບັງຄັບໃຊ້ກົດໝາຍ ໃຫ້ມີຄວາມສັກສິດ, ຍຸດຕິທໍາ ແລະ ໂປ່ງໃສ ແນໃສ່ສ້າງເງື່ອນໄຂໃນການຈັດເກັບລາຍຮັບ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ, ແລະ ປະກອບສ່ວນປົກປ້ອງ ຄວາມປອດໄພ ຂອງສັງຄົມ.

**ນະຄອນຫລວງວຽງຈັນ, ວັນທີ**
**ຫົວໜ້າກົມພາສີ**

# ພາກທີ I: ສະຫລຸບການຈັດຕັ້ງປະຕິບັດວຽກງານພາສີ ໃນໄລຍະຜ່ານມາ (2012-2017)

## 1. ສະພາບລວມ

ກົມພາສີ ໄດ້ປະຕິບັດໜ້າທີ່ ຕາມກົດໝາຍວ່າດ້ວຍພາສີ, ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011, ກົດໝາຍວ່າດ້ວຍພາສີ ປັບປຸງບາງມາດຕາ, ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014 ແລະ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນເລກທີ: 2826/ກງ, ລົງວັນທີ: 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.

ການປະຕິບັດໜ້າທີ່ຂອງກົມພາສີ ແມ່ນອີງຕາມທິດທາງ ນະໂຍບາຍ ແລະ ການມອບໝາຍຂອງລັດຖະບານ, ຕົ້ນຕໍແມ່ນ: 1) ການຈັດເກັບລາຍຮັບເຂົ້າງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ, 2) ການອຳນວຍຄວາມສະດວກໃຫ້ແກ່ການຄ້າ ທີ່ຖືກກົດໝາຍ, 3) ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເພື່ອຜົນປະໂຫຍດຂອງປະເທດຊາດ, 4) ການຮ່ວມມືກັບອົງກອນບັງຄັບໃຊ້ກົດໝາຍກ່ຽວກັບວຽກງານປົກປ້ອງຄວາມປອດໄພຂອງສັງຄົມຈາກການກໍ່ການຮ້າຍ, ຢາເສບຕິດ, ການຟອກເງິນ, ສິນຄ້າປອມແປງລິຂະສິດ ແລະ ອື່ນໆ.

ໃນໄລຍະຜ່ານມາ ກົມພາສີ ໄດ້ເນັ້ນໜັກ ການພັດທະນາຂະແໜງພາສີ ໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະ ໄດ້ສຳເລັດການສ້າງ ແລະປັບປຸງ ບັນດານິຕິກຳ ຂອງຂະແໜງ ພາສີ ໃຫ້ສອດຄ່ອງກັບສົນທິສັນຍາ ສາກົນ ແລະ ພາກພື້ນເປັນແຕ່ລະໄລຍະ, ດຳເນີນການຈັດເກັບລາຍຮັບໄດ້ຕາມແຜນທີ່ສະພາຮັບຮອງ, ໄດ້ຂຸດຄົ້ນຊອກຫາຫາແຫລ່ງລາຍຮັບພາຍໃນໃໝ່ ເພື່ອປ່ຽນແທນການຫລຸດລົງຂອງລາຍຮັບພາສີ ທີ່ເປັນຜົນມາຈາກການປະຕິບັດແຜນຫລຸດຜ່ອນອັດຕາພາສີໃນກອບອາຊຽນ ແລະ ອົງການພາສີໂລກ, ໄດ້ນຳໃຊ້ລະບົບແຈ້ງພາສີອີເລັກໂຕຼນິກ (ASYCUDA) ຢູ່ບັນດາດ່ານພາສີສາກົນ ຈຳນວນ 24 ດ່ານ ແລະ 1 ເຂດເສດຖະກິດພິເສດ, ແລະ ໄດ້ປັບປຸງຂັ້ນຕອນການອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງຊາດ ແລະ ສາມາດເຊື່ອມໂຍງກັບສາກົນ,ໂດຍສະເພາະແມ່ນການເຊື່ອມໂຍງ ກັບປະຊາຄົມອາຊຽນ (AEC).

## 2. ຜົນສຳເລັດແຕ່ລະດ້ານຂອງວຽກງານພາສີ

ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ຂະແໜງພາສີ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ເອົາໃຈໃສ່ ຈັດເກັບລາຍຮັບພາສີ-ອາກອນ ສອດຄ່ອງກັບແຜນງົບປະມານແຫ່ງລັດແຕ່ລະໄລຍະ, ຊຶ່ງສະແດງອອກໃນແຕ່ລະດ້ານດັ່ງນີ້:

### 2.1 ວຽກງານການຈັດເກັບລາຍຮັບພາສີ-ອາກອນ ແລະ ຄ່າທຳນຽມອື່ນໆ ເຂົ້າງົບປະມານ:

ໃນໄລຍະຜ່ານມາ ການຈັດເກັບລາຍຮັບ ຂອງຂະແໜງພາສີ ໃນແຕ່ລະປີ ແມ່ນໄດ້ເພີ່ມຂຶ້ນປະມານ 20%.

**ສະພາບການເກັບລາຍຮັບພາສີ ແຕ່ໄລຍະປີ 2011-2017**




| | 2011-2012(98%) | 2012-2013 (96%) | 2013-2014(101%) | 2014-2015 (89%) | 2015-2016 (74%) | 3 ເດືອນຂ້າມຜ່ານ(123%) | 2017(95%) |
|---|---|---|---|---|---|---|---|
| ແຜນປີ(ຕື້ກີບ) | 3,650 | 4,397 | 5,071 | 5,840 | 7,080 | 1,250 | 6,650 |
| ປະຕິບັດໄດ້ (ຕື້ກີບ) | 3,583 | 4,214 | 5,147 | 5,186 | 5,221 | 1,540 | 6,293 |

## 2.2 ການເຊື່ອມໂຍງ ແລະ ການຮ່ວມມື ລະດັບພາກພື້ນ ແລະ ສາກົນ:

ການເຊື່ອມໂຍງເສດຖະກິດ ແລະ ການຮ່ວມມື ລະດັບພາກພື້ນ ແລະ ສາກົນ ມີການຂະຫຍາຍຕົວເພີ່ມຂຶ້ນ ໂດຍມີ ຫຼາຍຮູບແບບ ຫຼາຍລະດັບ ແລະ ມີການແຂ່ງຂັນສູງຂຶ້ນ. ຫຼາຍໆປະເທດ ລວມທັງ ສປປ ລາວ ໄດ້ ກາຍເປັນ ສະມາຊິກຂອງອົງການສາກົນຕ່າງໆ ເປັນຕົ້ນ: ອົງການການຄ້າໂລກ **(WTO)** ແລະ ປະຊາຄົມເສດຖະກິດອາຊຽນ **(AEC)** ເພື່ອແນໃສ່ເຮັດໃຫ້ການຄ້າ, ການລົງທຶນ ແລະ ການບໍລິການເພີ່ມຂຶ້ນ. ຍ້ອນສາເຫດທີ່ກ່າວມາ ເຮັດໃຫ້ກົມພາສີ ໄດ້ເອົາໃຈໃສ່ ປັບປຸງລະບຽບການ ແລະ ນິຕິກຳລຸ່ມກົດໝາຍ ໃຫ້ສອດຄ່ອງຕາມແນວທາງນະໂຍບາຍ ຂອງພັກ-ລັດ ແລະ ລະບຽບການຂອງສາກົນ ເພື່ອປະຕິບັດພັນທະຂອງສປປ ລາວ ທີ່ມີຕໍ່ສາກົນ ເປັນຕົ້ນ: ສັນຍາຂອງອົງການການຄ້າໂລກ ວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ **(WTO Trade Facilitation Agreement)**, ສົນທິສັນຍາ ສາກົນ ວ່າດ້ວຍການສ້າງລະບຽບການທາງພາສີໃຫ້ກະທັດຮັດ ແລະ ກົມກຽວ ຫລື ເອີ້ນວ່າ ສົນທິສັນຍາກຽວໂຕ ສະບັບ ປັບປຸງ **(Revised Kyoto Convention)**, ສັນຍາວ່າດ້ວຍ ກອບການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າຜ່ານ ແດນອາຊຽນ (ASEAN Framework agreement on the facilitation of Goods in Transit), ສັນຍາວ່າ ດ້ວຍການສ້າງຕັ້ງ ແລະ ຈັດຕັ້ງປະຕິບັດລະບົບແຈ້ງພາສີປະຕູດຽວອາຊຽນ (**Agreement to establish and implement the ASEAN Single Window)**, ບັນດາສັນຍາການຄ້າເສລີ **(Free Trade Agreements)**, ສັນຍາ ວ່າດ້ວຍການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນ ຂ້າມແດນໃນກອບ GMS **(GMS Cross-Border Transport Facilitation Agreement)** ແລະ ອື່ນໆ.

ນອກຈາກນັ້ນ, ກົມພາສີ ຍັງໄດ້ເປີດກ້ວາງ ການຮ່ວມມື ໃນກອບສອງຝ່າຍ ກັບບັນດາປະເທດທີ່ມີຊາຍແດນຕິດ ຈອດ, ປະເທດສະມາຊິກອາຊຽນ, ຄູ່ຮ່ວມພັດທະນາຂອງອາຊຽນ, ບັນດາປະເທດສະມາຊິກສະຫະພາບເອີຣົບ, ສະຫະລັດອາເມລິກາ ແລະ ອົງການຈັດຕັ້ງສາກົນ ເປັນຕົ້ນ ກຸ່ມທະນາຄານໂລກ, ທະນາຄານພັດທະນາອາຊີ, ກອງທຶນ ການເງິນສາກົນ, ແລະ ອື່ນໆ ທີ່ສະໜັບສະໜູນທຶນເພື່ອການພັດທະນາ, ປົກປ້ອງສິ່ງແວດລ້ອມ, ຕ້ານການກໍ່ການຮ້າຍ, ຕ້ານການຟອກເງິນ ແລະ ອື່ນໆ ທັງເປັນການສ້າງໂອກາດໃນການພັດທະນາ ພື້ນຖານໂຄງລ່າງ, ປັບປຸງອຸປະກອນນຳໃຊ້ ໃນວຽກງານ, ແລກປ່ຽນຂໍ້ມູນ ແລະ ສ້າງຂີດຄວາມສາມາດດ້ານວິຊາສະເພາະໃຫ້ແກ່ພະນັກງານພາສີ ເພື່ອສາມາດ ປະຕິບັດພັນທະຂອງ ສປປ ລາວ ໃຫ້ສຳເລັດຕາມຄາດໝາຍ.

## 2.3 ວຽກງານສ້າງແລະປັບປຸງນິຕິກຳຂະແໜງພາສີ

ກົມພາສີ ໄດ້ສຳເລັດການສ້າງ ແລະ ປັບປຸງ ບັນດານິຕິກຳ ອັນສຳຄັນ ດັ່ງລຸ່ມນີ້:

- ກົດໝາຍ ວ່າດ້ວຍພາສີ ປັບປຸງບາງມາດຕາ, ສະບັບເລກທີ 57, ລົງວັນທີ 24 ທັນວາ 2014.
- ຂໍ້ຕົກລົງ ຂອງກະຊວງການເງິນ ວ່າດ້ວຍການຄຸ້ມຄອງລັດຖະກອນ ຂອງລັດຖະການພາສີ, ສະບັບເລກທີ 3198/ກງ, ລົງວັນທີ 22/09/2015.
- ບົດແນະນຳ ຂອງກະຊວງການເງິນ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍພາສີ, ສະບັບເລກທີ 1559/ກງ, ລົງວັນທີ 24/05/2016.
- ບົດແນະນຳ ກະຊວງການເງິນ ວ່າດ້ວຍການຄຸ້ມຄອງການສົ່ງອອກ-ນຳເຂົ້າ ສິນຄ້າ ເຄື່ອງຂອງ ຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ, ສະບັບເລກທີ 4115/ກງ, ລົງວັນທີ 12/12/2016.
- ບົດແນະນຳຂອງກົມພາສີ ກ່ຽວກັບຂັ້ນຕອນການແຈ້ງພາສີເປັນລາຍລະອຽດດ້ວຍລະບົບອີເລັກໂທຼນິກ, ສະບັບເລກທີ 0097/ກພສ, ລົງວັນທີ 06/01/2017.
- ຂໍ້ຕົກລົງກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກົມພາສີ, ສະບັບເລກທີ 2826/ກງ, ລົງວັນທີ 22/08/2017.

## 2.4 ວຽກງານການທັນພາສີເປັນທັນສະໄໝ:

ຄຽງຄູ່ກັບການປັບປຸງລະບຽບການ, ກົມພາສີ ໄດ້ໃຫ້ຄວາມສຳຄັນ ແລະ ພະຍາຍາມນຳໃຊ້ເຄື່ອງມືທັນສະໄໝເຂົ້າໃນວຽກງານພາສີໃຫ້ຫຼາຍຂຶ້ນ ເຊັ່ນ: ການແຈ້ງພາສີເປັນລາຍລະອຽດແບບອີເລັກໂທຣນິກ ( ASYCUDA), ລະບົບການຊຳລະຄ່າພາສີ ແລະ ພັນທະອື່ນ ທາງອີເລັກໂທຣນິກ (Smart Tax), ລະບົບການຈັດເກັບຄ່າທຳນຽມ ຄົນເຂົ້າ-ອອກຜ່ານດ່ານພາສີສາກົນ ແບບອີເລັກໂທຣນິກ, ລະບົບການຈັດເກັບອາກອນມູນຄ່າເ ພີ່ມໃນອັດຕາສິບສ່ວນຮ້ອຍ (10%) ສຳລັບເຄື່ອງຂອງຕິດຕົວຜູ້ໂດຍສານຂາເຂົ້າ (Smart VAT), “ ລະບົບຕິດຕາມການນຳເຂົ້າ ແລະ ຈຳໜ່າຍນໍ້າມັນເຊື້ອໄຟແບບອີເລັກໂທຼນິກ (E-Meter), ເຄື່ອງກວດກາສິນຄ້າດ້ວຍລະບົບສາຍແສງ (Scanner) ຈຳນວນ 8 ເຄື່ອງໃນທົ່ວປະເທດ, ລະບົບຄຸ້ມຄອງ ຫັກລົບແຜນນຳເຂົ້າ ຂອງໂຄງການລົງທຶນ ແບບອີເລັກໂທຼນິກ. ບັນດາລະບົບດັ່ງກ່າວ ເຮັດໃຫ້ການເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງ ມີຄວາມສະດວກ ວ່ອງໄວ, ສາມາດຫຼຸດຜ່ອນຂັ້ນຕອນ ແລະ ຄ່າໃຊ້ຈ່າຍ ທີ່ບໍ່ຈຳເປັນ ຢູ່ບັນດາດ່ານພາສີຊາຍແດນ ດີຂຶ້ນກວ່າເກົ່າ.

ພ້ອມດຽວກັນນັ້ນ, ກົມພາສີກໍ່ໄດ້ສຳເລັດການພັດທະນາລະບົບແຈ້ງພາສີປະຕູດຽວ (LNSW) ແລະ ໄດ້ທົດລອງນຳໃຊ້ເຂົ້າໃນການຄຸ້ມຄອງການອອກອະນຸຍາດນຳເຂົ້າສິນຄ້າປະເພດພາຫະນະ ຢູ່ກົມການນຳເຂົ້າ-ສົ່ງອອກ ແລະ ກົມຂົນສົ່ງ ສຳເລັດຕາມລະດັບຄາດໝາຍ. ປະຈຸບັນ ລະບົບດັ່ງກ່າວມີຄວາມພ້ອມທັງດ້ານເຕັກນິກ ຊຶ່ງກົມພາສີໄດ້ກຳນົດແຜນເລີ່ມນຳໃຊ້ໃນປີ 2019.

ໄດ້ດຳເນີນການພັດທະນາ ແລະ ກະກຽມເປີດຕົວເວັບໄຊ໌ ຂອງກົມພາສີ ໃນຕົ້ນປີ 2019, ຊຶ່ງເວັບໄຊທ໌ ດັ່ງກ່າວແມ່ນໄດ້ຮວບຮວມຂໍ້ມູນ, ຂ່າວສານ, ບັນດາຂັ້ນຕອນ ແລະ ລະບຽບການຕ່າງໆ ເພື່ອເຜີຍແຜ່ຕໍ່ສັງຄົມ.

## 2.5 ວຽກງານຕ້ານສະກັດກັ້ນການລັກລອບໜີພາສີ

ກົມພາສີ ໄດ້ສົມທົບກັບເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍຂອງຂະແໜງການອື່ນໆ ດໍາເນີນການຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ, ຊຶ່ງໃນແຕ່ລະປີ ສາມາດຈັບກຸມ ແລະ ດໍາເນີນຄະດີທາງພາສີ ຕໍ່ຜູ້ທີ່ລັກລອບ ຊຸກເຊື່ອໄມ້ຕ້ອງຫ້າມ ຫລື ຜະລິດຕະພັນໄມ້ ທີ່ບໍ່ຖືກຕ້ອງຕາມລະບຽບການຂອງ ສປປ ລາວ ເພື່ອສົ່ງອອກນອກປະເທດ, ຄະດີການນໍາເຂົ້າພາຫະນະ ທີ່ມີການປອມແປງເອກະສານ, ພາຫະນະນໍາເຂົ້າຊົ່ວຄາວ ແລະ ບໍ່ມີເອກະສານນໍາເຂົ້າພາຫະນະ. ນອກຈາກນັ້ນ, ຍັງໄດ້ມີຄະດີນໍາເຂົ້ານໍ້າມັນເຊື້ອໄຟໂດຍເອົາໄປນໍາໃຊ້ບໍ່ຖືກຕ້ອງຕາມຈຸດປະສົງເປົ້າໝາຍທີ່ກໍານົດ ໃນລະບຽບການ. ພ້ອມກັນນັ້ນ, ກົມພາສີ ຍັງໄດ້ຮ່ວມມືກັບຂະແໜງການພາຍໃນ ອື່ນໆ ເພື່ອຕ້ານແລະສະກັດກັ້ນ ການຟອກເງິນ ໂດຍ ເອົາໃຈໃສ່ກວດກາການນໍາເຂົ້າເງິນສົດ ໂດຍບໍ່ມີການແຈ້ງຕາມລະບຽບກົດໝາຍ, ການຄ້າຂາຍເຄື່ອງປ່າຂອງດົງ ແລະ ສັດປ່າ ທີ່ນອນຢູ່ໃນບັນຊີຂອງສົນທິສັນຍາ CITES, ການນໍາເຂົ້າຢາເສບຕິດ ຫລື ສານຕັ້ງຕົ້ນ, ແລະ ສິນຄ້າເກືອດຫ້າມອື່ນໆ ຕາມລະບຽບການຂອງ ສປປ ລາວ.

ການແກ້ໄຂຄະດີ ໃນໄລຍະປີ 2015-2016 ເປັນຕົ້ນມາ, ຊຶ່ງເຫັນວ່າ ມີຈໍານວນເພີ່ມຂຶ້ນ ລວມເຖິງຄ່າພາສີ-ອາກອນ ແລະ ຄ່າປັບໄໝ ສາເຫດແມ່ນເນື່ອງມາຈາກ ການຈັດຕັ້ງປະຕິບັດນະໂຍບາຍແກ້ໄຂ ລົດນໍາເຂົ້າບໍ່ຖືກຕ້ອງ ໃນຂອບເຂດທົ່ວປະເທດ. ລາຍລະອຽດສາມາດສັງລວມສະຖິຕິຄະດີການລັກລອບສິນຄ້າໜີພາສີ ໃນແຕ່ລະປີ ໄດ້ດັ່ງລຸ່ມນີ້:






## 2.6 ວຽກງານການຍົກເວັ້ນ ແລະ ງົດເກັບພາສີ-ອາກອນ

ກົມພາສີ ໄດ້ເອົາໃຈໃສ່ໃນການຄຸ້ມຄອງວຽກງານນຳເຂົ້າວັດຖຸອຸປະກອນ, ພາຫະນະ, ກົນຈັກໜັກ, ນ້ຳມັນເຊື້ອໄຟ ແລະ ອື່ນໆ ທີ່ນຳເຂົ້າຍົກເວັ້ນມາຮັບໃຊ້ໂຄງການລົງທຶນ, ທີ່ໄດ້ຮັບການອະນຸມັດຈາກບັນດາກະຊວງທີ່ກ່ຽວຂ້ອງ ຊຶ່ງສອດຄ່ອງກັບກົດໝາຍ ແລະ ລະບຽບການ, ລາຍລະອຽດ ສະຖິຕິການນຳເຂົ້າຍົກເວັ້ນມີຄື:




| | 2014-2015 | 2015-2016 | 2017 |
|---|---|---|---|
| ມູນຄ່າການນຳເຂົ້າທີ່ຖືກຍົກເວັ້ນຄ່າພາສີອາກອນ (ກີບ) | 27,294,592,688,570 | 26,336,012,764,127 | 34,720,011,438,803 |
| ຄ່າພາສີອາກອນທີ່ຖືກຍົກເວັ້ນ (ກີບ) | 2,277,026,029,980 | 2,302,443,831,500 | 3,094,361,950,600 |

## 2.7 ວຽກງານກົງຈັກການຈັດຕັ້ງ ແລະ ການພັດທະນາຊັບພະຍາກອນມະນຸດ

ໃນດ້ານວຽກງານກົງຈັກການຈັດຕັ້ງ ແລະ ການພັດທະນາຊັບພະຍາກອນມະນຸດ, ກົມພາສີ ໄດ້ປັບປຸງໂຄງຮ່າງການຈັດຕັ້ງຄືນໃໝ່ ເພື່ອໃຫ້ແທດເໝາະກັບສະພາບພູມີປະເທດ ແລະ ຕອບສະໜອງຄວາມຕ້ອງການຕົວຈິງຂອງວຽກງານວິຊາສະເພາະ. ວຽກງານງານການພັດທະນາບຸກຄະລາກອນ ຖືເປັນບູລິມະສິດອັນສຳຄັນ ຂອງກົມພາສີ, ມີເປົ້າໝາຍຍົກລະດັບຂີດຄວາມສາມາດ ຂອງພະນັກງານ-ເຈົ້າໜ້າທີ່ພາສີ ໃນຂອບເຂດທົ່ວປະເທດ ໃຫ້ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ມີຈັນຍາບັນ ຈັນຍາທຳ, ມີຄວາມຮູ້ທາງດ້ານວິຊາສະເພາະ ໃນລະດັບທີ່ແນ່ນອນ ແລະ ສ້າງຄວາມພ້ອມໃນຈັດຕັ້ງປະຕິບັດວຽກງານ ທີ່ເປັນພັນທະຕໍ່ປະຊາຄົມເສດຖະກິດອາຊຽນ ແລະ ສາກົນ.

ໂຄງປະກອບການຈັດຕັ້ງຂອງລັດຖະການພາສີ ແຕ່ປີ 2015-2016 ປະກອບມີສອງຂັ້ນຄຸ້ມຄອງຄື: ຂັ້ນສູນກາງ (ປະກອບມີ 10 ພະແນກ) ແລະ ຂັ້ນທ້ອງຖິ່ນ (ປະກອບມີ 17 ກອງກວດກາພາສີ, 26 ດ່ານພາສີ ສາກົນ, 19ດ່ານພາສີ ທ້ອງຖິ່ນ, ແລະ 12 ດ່ານພາສີ ປະເພນີ)

## ໂຄງປະກອບການຈັດຕັ້ງຂອງກົມພາສີ ແຕ່ປີ 2015-2016



ສໍາລັບໂຄງປະກອບການຈັດຕັ້ງຂອງລັດຖະການພາສີ ແຕ່ປີ 2017 ຮອດ ປະຈຸບັນ, ກົມພາສີ ໄດ້ກໍານົດໃຫ້ໂຄງປະກອບ ຂັ້ນສູນກາງ ມີຄວາມກະທັດຮັດຂຶ້ນກວ່າເກົ່າ ໂດຍປະກອບມີ 08 ພະແນກ (ຫລຸດ ຈາກ 10 ພະແນກ ), ສ່ວນໂຄງປະກອບຂັ້ນທ້ອງຖິ່ນ ແມ່ນ ປະກອບມີ 7 ກອງຄຸ້ມຄອງພາສີ, 10 ກອງກວດກາພາສີ, 26 ດ່ານພາສີ ສາກົນ, 19 ດ່ານພາສີ ທ້ອງຖິ່ນ, ແລະ 12 ດ່ານພາສີ ປະເພນີ.

## ໂຄງປະກອບການຈັດຕັ້ງຂອງກົມພາສີ ແຕ່ປີ 2017 ຮອດປະຈຸບັນ



- ຈຳນວນພະນັກງານພາສີ ຂອບເຂດທົ່ວປະເທດ ໃນປີ 2018 ປະກອບມີ:

- ພະນັກງານພາສີ ລວມທັງໝົດ 1.206 ຄົນ (ຊາຍ 1.016, ຍິງ 190ຄົນ): ຂັ້ນສູນກາງມີຈຳນວນ 258 ຄົນ (ຊາຍ 215, ຍິງ 43 ຄົນ) ແລະ ຂັ້ນທ້ອງຖິ່ນມີຈຳນວນ: 948 ຄົນ (ຊາຍ 801, ຍິງ 149 ຄົນ)









- ພະນັກງານພາສີ ປະກອບມີ 3 ລຸ້ນຄື: ພະນັກງານ ລຸ້ນໜຸ່ມນ້ອຍ (ອາຍຸແຕ່ 21-35ປີ) ກວມເອົາ 19%, ພະນັກງານ ລຸ້ນກາງ (ອາຍຸແຕ່ 36-45 ປີ) ກວມເອົາ 26%, ແລະ ພະນັກງານ ລຸ້ນອາວຸໂສ (ອາຍຸ ແຕ່ 46 ຂຶ້ນໄປ) ແມ່ນກວມເອົາ 55% ຂອງຈຳນວນພະນັກງານພາສີທັງໝົດ ໃນຂອບເຂດທົ່ວປະເທດ.

- ສະນັ້ນ, ໃນອີກ 14 ປີ ຕໍ່ໜ້າ ກົມພາສີ ມີຄວາມຈຳເປັນຮີບດ່ວນ ໃນການສ້າງຂີດຄວາມສາມາດ ໃຫ້ແກ່ພະນັກງານໜຸ່ມນ້ອຍ (19%) ແລະ ພະນັກງານລຸ້ນກາງ (26% ), ແນໃສ່ຮັບປະກັນໃຫ້ສາມາດຈັດຕັ້ງປະຕິບັດວຽກງານວິຊາສະເພາະ ແລະວຽກງານ ການບໍລິຫານງານອົງກອນ ໃຫ້ມີຄວາມຊໍານານ ເປັນມືອາຊີບ ເພື່ອຮອງຮັບການເຂົ້າບໍານານຂອງພະນັກງານພາສີອາວຸໂສ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ຈໍານວນທັງໝົດ 659 ຄົນ (55%).

**ຈຳນວນລັດຖະກອນພາສີທັງໝົດ, ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ແຍກຕາມກຸ່ມອາຍຸ ( ຂໍ້ມູນປີ 2018 )**




| | 21-25 ປີ | 26-30 ປີ | 31-35 ປີ | 36-40 ປີ | 41-45 ປີ | 46-50 ປີ | 51-55 ປີ | 56-60 ປີ | 61 ຂຶ້ນໄປ |
|---|---|---|---|---|---|---|---|---|---|
| ພາສີ ຂັ້ນສູນກາງ | 2 | 17 | 41 | 28 | 34 | 33 | 64 | 36 | 3 |
| ພາສີ ຂັ້ນທ້ອງຖິ່ນ | 2 | 42 | 128 | 143 | 104 | 151 | 260 | 115 | 3 |
| ລວມທັງໝົດ | 4 | 59 | 169 | 171 | 138 | 184 | 324 | 151 | 6 |

## 3. ບາງຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້

### 3.1 ບາງຂໍ້ຄົງຄ້າງ

ເຖິງແມ່ນວ່າໃນໄລຍະຜ່ານມາ ກົມພາສີ ໄດ້ປັບປຸງກົດໝາຍ, ລະບຽບການ, ຂັ້ນຕອນ, ກົນໄກການປະສານງານ ແລະ ການບໍລິຫານວຽກງານວິຊາສະເພາະ ໃຫ້ມີຄວາມກະທັດຮັດ, ໂປ່ງໃສ, ທັນສະໄໝ, ແລະ ເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ ເປົ້າໝາຍແນໃສ່ ການຈັດເກັບລາຍຮັບໃຫ້ໄດ້ຕາມແຜນການ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງຊາດ ແລະ ຈັດຕັ້ງປະຕິບັດພັນທະຂອງຂະແໜງພາສີ ທີ່ ສປປ ລາວ ມີຕໍ່ສາກົນ ໂດຍສະເພາະ ທີ່ຕິດພັນກັບການອໍານວຍສະດວກດ້ານການຄ້າ ແລະ ການປົກປ້ອງຄວາມປອດໄພຂອງສັງຄົມ, ແຕ່ກົມພາສີ ກໍ່ຍັງ ພົບພໍ້ກັບບາງຂໍ້ຄົງຄ້າງ ແລະ ຂໍ້ຈໍາກັດຫລາຍດ້ານເຊັ່ນ:

1. ກົນໄກການບໍລິຫານ ພາຍໃນລັດຖະການພາສີ ໂດຍສະເພາະ ຄວາມຮັບຜິດຊອບຂອງມະຫາພາກ(ກົມພາສີ) ແລະ ທ້ອງຖິ່ນ (ບັນດາກອງຄຸ້ມຄອງພາສີ ແລະ ດ່ານພາສີຊາຍແດນຜູ້ປະຕິບັດງານ) ຍັງມີຫລາຍຂັ້ນຕອນ ແລະ ການແບ່ງຄວາມຮັບຜິດຊອບ ກໍ່ບໍ່ທັນມີຄວາມຊັດເຈນ ເຮັດໃຫ້ກົນໄກການແກ້ໄຂວຽກງານວິຊາສະເພາະບາງຄັ້ງ ຍັງມີລັກສະນະຊັກຊ້າ ບໍ່ທັນກັບຄວາມຮຽກຮ້ອງຕ້ອງການ.

2. ການພັດທະນາຄວາມຮູ້ຄວາມສາມາດ ໃຫ້ແກ່ພະນັກງານພາສີ ນັບແຕ່ສູນກາງ ລົງຮອດທ້ອງຖິ່ນ ໂດຍສະເພາະ ຄວາມຮູ້ພື້ນຖານ ກ່ຽວກັບການປະຕິບັດວຽກງານພາສີ ໃນໄລຍະໃໝ່ ເປັນຕົ້ນ: ກົດໝາຍ ແລະ ລະບຽບການ ທັງພາຍໃນ ແລະ ຕ່າງປະເທດ, ເຕັກນິກວິຊາສະເພາະດ້ານພາສີ, ການນໍາໃຊ້ອຸປະກອນເຄື່ອງມືທີ່ທັນສະໄໝ, ພາສາຕ່າງປະເທດ, ແລະອື່ນໆ ຍັງດໍາເນີນໄປໃນລັກສະນະບໍ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ, ບໍ່ເປັນລະບົບຕໍ່ເນື່ອງ, ບໍ່ຄອບຄຸມທົ່ວເຖິງໃນຂອບເຂດທົ່ວປະເທດ. ສາເຫດແມ່ນເນື່ອງມາຈາກ ຍັງບໍ່ທັນມີ ການກໍານົດຫລັກສູດ ແລະ ຍຸດທະສາດໃນການພັດທະນາບຸກຄະລາກອນ ໄລຍະສັ້ນ ໄລຍະຍາວ ຂອງຂະແໜງພາສີ ຢ່າງເປັນລະບົບ ສົ່ງຜົນໃຫ້ການກໍ່ສ້າງ ພະນັກງານລຸ້ນສືບທອດ ຂອງຂະແໜງພາສີ ບໍ່ສາມາດຈັດຕັ້ງປະຕິບັດ ໄດ້ຢ່າງເປັນຮູບປະທໍາ.

3. ວຽກງານ ການກວດກາພາຍໃນ ຂອງລັດຖະການພາສີ ຍັງບໍ່ທັນມີຄວາມເຂັ້ມແຂງ ແລະຈັດຕັ້ງປະຕິບັດຢ່າງເປັນປົກກະຕິ, ການປະສານ ສົມທົບກັບ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ຕິດຕາມ ແລະ ກໍ່ສ້າງ ພະນັກງານພາສີ ທີ່ປະຈໍາຢູ່ແຕ່ລະທ້ອງຖິ່ນ ໃນໄລຍະຜ່ານມາ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ໂດຍສະເພາະວຽກງານການກໍ່ສ້າງ ແລະ ການສຶກສາອົບຮົມທາງດ້ານຄຸນທາດການເມືອງ ຄຸນສົມບັດ ສິນທໍາປະຕິວັດຂອງ ພະນັກງານພາສີ, ຈຶ່ງເຮັດໃຫ້ເກີດມີປະກົດການ ຫຍໍ້ທໍ້ໃນຂົງເຂດພະນັກງານພາສີ. ພະນັກງານຈໍານວນໜຶ່ງ ກໍ່ຂາດຈັນຍາບັນຈັນຍາທໍາ, ເສຍທາດຂາດຄຸນ ຈົນກ້າວໄປເຖິງຖືກປະຕິບັດວິໄນ.

4. ກົມພາສີ ໄດ້ລົງທຶນເຂົ້າໃນການພັດທະນາລະບົບ ແລະ ເຄື່ອງມື ທັນສະໄໝ ຮັບໃຊ້ການປະຕິບັດວຽກງານວິຊາສະເພາະພາສີ ຫລາຍດ້ານ ຕົ້ນຕໍ ແມ່ນທີ່ຕິດພັນກັບ ຂະບວນການແຈ້ງພາສີ, ການກວດກາສິນຄ້າ, ເຄື່ອງຂອງ ແລະ ການຊໍາລະຄ່າພາສີ-ອາກອນ ແລະ ຄ່າທໍານຽມ, ແຕ່ເຫັນວ່າຍັງ ບໍ່ທັນເປັນລະບົບຄົບຊຸດ ໂດຍສະເພາະ ຍັງຂາດລະບົບ ຕິດຕາມ ກວດກາ ແລະ ຄຸ້ມຄອງ ບໍລິຫານ ຄວາມສ່ຽງ. ນອກນັ້ນ, ລະບົບກໍ່ຍັງບໍ່ທັນມີຄວາມສະຖຽນ (ຂັດຂ້ອງດ້ານເຕັກນິກ) ເຮັດໃຫ້ຂອດຂັ້ນຂອງການບໍລິຫານວຽກງານພາສີ ຍັງບໍ່ທັນຄ່ອງຕົວ ບໍ່ສາມາດອໍານວຍຄວາມສະດວກ, ຄຸ້ມຄອງ, ກວດກາ, ຕິດຕາມ ແລະ ປະເມີນຜົນວຽກງານວິຊາສະເພາະຂອງຂະແໜງພາສີ ໄດ້ຢ່າງເຕັມເມັດເຕັມໜ່ວຍ.

5. ການປະສານງານ ສົມທົບ ກັບຂະແໜງການກ່ຽວຂ້ອງ ພາຍໃນປະເທດ ກ່ຽວກັບ ການປະຕິບັດວຽກງານວິຊາສະເພາະຂອງຂະແໜງພາສີ ເຫັນວ່າ ຍັງມີຫລາຍດ້ານ ຕ້ອງໄດ້ສືບຕໍ່ ປະສານງານ ຮ່ວມມື ເພື່ອຄວາມເປັນເອກະ

ພາບ ແລະ ສ້າງຄວາມກົມກຽວ ໃນການປະຕິບັດວຽກງານວິຊາສະເພາະ. ການຮ່ວມມືກັບພາກທຸລະກິດ ຍັງບໍ່ທັນມີກົນໄກ ການຮ່ວມມື ແບບສອງຝ່າຍ, ຈຶ່ງເຮັດໃຫ້ວຽກງານດັ່ງກ່າວ ບໍ່ມີໝາກຜົນເປັນຮູບປະທຳ.

6. ເຖິງແມ່ນວ່າກົມພາສີ ຈະມີການຮ່ວມມືກັບພາກພື້ນ ແລະສາກົນ ຢ່າງກວ້າງຂວາງໃນໄລຍະຜ່ານມາ, ແຕ່ ຍັງບໍ່ທັນມີການວິເຄາະວິໄຈ ຈຸດແຂງ ຈຸດອ່ອນ ຂອງບັນດາຄູ່ຮ່ວມພັດທະນາຕ່າງປະເທດ ເພື່ອສ້າງເປັນແຜນຍຸດທະສາດການຮ່ວມມືແບບຄົບຊຸດ ທີ່ສອດຄ່ອງກັບແຜນຍຸດທະສາດໂດຍລວມ ແລະ ແຜນພັດທະນາບຸກຄະລາກອນ ໄລຍະສັ້ນ-ໄລຍະຍາວ ຂອງຂະແໜງພາສີ ເພື່ອພ້ອມທີ່ຈະຍາດແຍ່ງເອົາຜົນປະໂຫຍດຈາກຕ່າງປະເທດ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້ ໂດຍສະເພາະ ການແລກປ່ຽນຄວາມຮູ້ດ້ານເຕັກນິກວິຊາສະເພາະພາສີ ລະດັບພາກພື້ນ ແລະ ລະດັບສາກົນ ເພື່ອຮັບປະກັນໃຫ້ການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ ມີປະສິດທິພາບ ປະສິດທິຜົນຕາມເປົ້າໝາຍຂອງກົມພາສີ.

7. ການສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດາລະບຽບການຂອງຂະແໜງພາສີ ແມ່ນຍັງບໍ່ທັນຕອບສະໜອງໄດ້ ກັບສະພາບການປ່ຽນແປງທາງດ້ານການຄ້າ ແລະ ການລົງທຶນ ໃນແຕ່ລະໄລຍະ, ຊຶ່ງສິ່ງຜົນເຮັດໃຫ້ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ບາງໜ້າວຽກ ຂອງຂະແໜງພາສີ ແມ່ນຍັງບໍ່ທັນບັນລຸໄດ້ຕາມມາດຕະຖານການອຳນວຍຄວາມດວກທາງດ້ານການຄ້າ ການລົງທຶນ ແລະ ລະບຽບການສາກົນ ເປັນຕົ້ນ: ການບໍລິຫານຄວາມສ່ຽງ,ການຢັ້ງຢືນຮັບຮອງລ່ວງໜ້າ, ການສະເໜີຄືນດ້ານພາສີ, ການກວດສອບຄືນການແຈ້ງພາສີ, ແລະ ອື່ນໆ.

8. ການເຄື່ອນໄຫວວຽກງານຕ້ານ ແລະ ສະກັດກັ້ນ ການລັກລອບໜີພາສີ, ການຄ້າຂາຍເຖື່ອນ ຍັງບໍ່ທັນລວມສູນ ແລະຂາດຍຸດທະສາດໃນການດຳເນີນວຽກງານເປັນຕົ້ນ ການວິເຄາະວິໄຈຂໍ້ມູນແຫລ່ງຂ່າວ, ການບໍລິຫານຄວາມສ່ຽງ ແລະການກຳນົດເປົ້າໝາຍການກວດກາ, ຈຶ່ງເຮັດໃຫ້ສະພາບການລັກລອບ ໜີພາສີ ທັງໃນດ່ານ ແລະ ນອກດ່ານ ມີລັກສະນະແຜ່ຫລາຍ, ຊຶ່ງສິ່ງຜົນກະທົບ ຕໍ່ວຽກງານການຈັດເກັບລາຍຮັບ ແລະ ການບັງຄັບໃຊ້ກົດໝາຍ ບໍ່ໄດ້ປະສິດທິຜົນເທົ່າທີ່ຄວນ.

## 3.2 ບົດຮຽນທີ່ຖອດຖອນໄດ້

ຜ່ານການຕີລາຄາຜົນງານ ແລະ ບາງຂໍ້ຄົງຄ້າງຂ້າງເທິງ ສາມາດຖອດຖອນບົດຮຽນໄດ້ດັ່ງນີ້:

1. ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ໃນການບໍລິຫານອົງກອນ ກົມພາສີ ຕ້ອງໄດ້ປະສານສົມທົບ ກັບຂະແໜງການກ່ຽວຂ້ອງເພື່ອປັບປຸງ ໂຄງປະກອບການຈັດຕັ້ງ ຂອງລັດຖະການພາສີ ເປັນຕົ້ນ ບັນດາພະແນກ ແລະກອງຄຸ້ມຄອງພາສີໃນທົ່ວປະເທດ ລວມເຖິງການປັບປຸງແບບແຜນວິທີການເຮັດວຽກ, ກົນໄກການປະສານງານ, ແລະ ລະບຽບການຄຸ້ມຄອງພະນັກງານພາສີ ໂດຍກຳນົດລາຍລະອຽດ ໜ້າທີ່ຮັບຜິດຊອບ, ມາດຖານຄຸນສົມບັດ ສົມທຳປະຕິວັດ ແລະ ຄວາມຮູ້ດ້ານວິຊາສະເພາະ ຂອງແຕ່ລະຕຳແໜ່ງງານ ໃຫ້ມີລັກສະນະວິທະຍາສາດ ແລະ ສົມເຫດສົມຜົນ. ຄຽງຄູ່ກັນນັ້ນ, ກົມພາສີ ຕ້ອງກຳນົດບູລິມະສິດການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ພາສີ ຢ່າງມີຈຸດສຸມ, ດຳເນີນການພັດທະນາຫລັກສູດການສິດສອນ, ກຳນົດແຜນກໍ່ສ້າງບຸກຄະລາກອນແຕ່ລະລຸ້ນ ແລະ ດຳເນີນການຈັດຝຶກອົບຮົມຢ່າງເປັນລະບົບຕໍ່ເນື່ອງ ເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານວິຊາສະເພາະໃນແຕ່ລະໄລຍະ. ພ້ອມນັ້ນ, ຕ້ອງກຳນົດຮູບແບບການປະເມີນຜົນການດຳເນີນງານຂອງພະນັກງານແຕ່ລະຄົນ ໃຫ້ມີລັກສະນະສາມາດຈັດຕັ້ງປະຕິບັດໄດ້ ແລະສົມເຫດສົມຜົນກັບສະພາບເງື່ອນໄຂຄວາມເປັນຈິງ.

2. ເພື່ອແກ້ໄຂບັນດາປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານຂະແໜງພາສີ ໃຫ້ໝົດໄປ, ກົມພາສີ ຕ້ອງໄດ້ດຳເນີນວຽກງານ ກວດກາພາຍໃນ ໃຫ້ມີຄວາມເຂັ້ມແຂງ, ປະຕິບັດລະບອບການຍ້ອງຍໍຊົມເຊີຍ ຕໍ່ພະນັກງານຜູ້ທີ່ມີຜົນການພົ້ນເດັ່ນ ແລະ ປະຕິບັດວິໄນຢ່າງເດັດຂາດ ຕໍ່ພະນັກງານຜູ້ເສຍທາດຂາດຄຸນ ພ້ອມດຽວກັນນັ້ນ ກໍ່ຕ້ອງໄດ້ເສີມຂະຫຍາຍວຽກງານການສຶກສາອົບຮົມດ້ານການເມືອງແນວຄິດໃນຂອບເຂດທົ່ວປະເທດ. ນອກຈາກນັ້ນ, ຕ້ອງໄດ້

ດຳເນີນວຽກງານການປະເມີນພະນັກງານຢ່າງເປັນປົກກະຕິໂດຍນຳໃຊ້ເຄື່ອງມືທີ່ທັນສະໄໝ(ໂປຼແກມຄອມພິວເຕີ) ເພື່ອ ຄຸ້ມຄອງປະຫວັດ ແລະ ການເຄື່ອນໄຫວ ຂອງບຸກຄະລາກອນ ຂະແໜງການພາສີ ໃນຂອບເຂດທົ່ວປະເທດ ຖືເປັນເຄື່ອງມືອັນສຳຄັນ ທີ່ຈຳເປັນ ໃນການເພີ່ມ ປະສິດທິພາບ ປະສິດທິຜົນ ຂອງວຽກງານທີ່ຕິດພັນກັບ ການແກ້ໄຂປະກົດການຫຍໍ້ທໍ້, ໂດຍສະເພາະເຮັດໃຫ້ກົມພາສີສາມາດ ຄຸ້ມຄອງພະນັກງານ ແລະຈັດວາງບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ ໃຫ້ສົມຄູ່ ກັບ ໜ້າທີ່ຮັບຜິດຊອບ ຂອງແຕ່ລະຕຳແໜ່ງງານ ແລະ ຫລຸດຜ່ອນທາງສຽງ ທີ່ບັ່ນທອນຄວາມອຸ່ນອ່ຽງທຸ່ນທ່ຽງ ຂອງພະນັກງານພາສີ ໃນຂອບເຂດທົ່ວປະເທດ.

3. ເພື່ອແກ້ໄຂ ບັນດາ ຂອດຂັ້ນ ການບໍລິຫານວຽກງານພາຍໃນອົງກອນພາສີໃຫ້ມີປະສິດທິພາບ ໂດຍສະເພາະຂະບວນການແກ້ໄຂເອກະສານທາງດ້ານວິຊາສະເພາະໃຫ້ມີຄວາມວ່ອງໄວ, ຕ້ອງໄດ້ມີການຫັນປ່ຽນລະບົບການປະຕິບັດງານແບບເຈ້ຍສໍ ໄປເປັນ ດ້ວຍລະບົບອີເລັກໂທຼນິກ ໃນທຸກຂົງເຂດວຽກງານຂອງຂະແໜງກາພາສີ ເປັນແຕ່ລະໄລຍະ, ຊຶ່ງລະບົບດັ່ງກ່າວ ຈະຊ່ວຍອຳນວຍຄວາມສະດວກໃນການປະຕິບັດວຽກງານປະຈຳວັນ ຂອງຂະແໜງພາສີ, ສາມາດຫລຸດຜ່ອນການຕິດຕໍ່ປະສານໂດຍກົງ ລະຫວ່າງເຈົ້າໜ້າທີ່ພາສີ ແລະ ແຂກພາຍນອກ, ອຳນວຍຄວາມສະດວກໃຫ້ຜູ້ບໍລິຫານງານຂອງອົງກອນ ສາມາດຕິດຕາມ ກວດກາ ແລະ ປະເມີນຜົນການປະຕິບັດວຽກງານປະຈຳວັນ ຂອງພະນັກງານພາສີ ໂດຍຜ່ານລະບົບອີເລັກໂທຼນິກ. ກົມພາສີ ຕ້ອງສ້າງແຜນພັດທະນາລະບົບໄອທີແບບຄົບຊຸດ ສາມາດເຊື່ອມຕໍ່ການບໍລິຫານວຽກງານພາສີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

4. ເພື່ອຮັບປະກັນປະສິດທິພາບ ປະສິດທິຜົນ ໃນການຍາດແຍ່ງເອົາຜົນປະໂຫຍດ ຈາກການຮ່ວມມືກັບພາກພື້ນ ແລະສາກົນ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້ ໂດຍສະເພາະ ການແລກປ່ຽນຄວາມຮູ້ດ້ານເຕັກນິກວິຊາສະເພາະພາສີ ແລະການສ້າງຂີດຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ພາສີ ກ້າວໄປເຖິງການເປັນຜູ້ຊຳນານງານ ໃນລະດັບພາກພື້ນ ແລະສາກົນ,  ກົມພາສີ ຕ້ອງສ້າງແຜນການຮ່ວມມືກັບຕ່າງປະເທດ ແບບຄົບຊຸດ ທີ່ສອດຄ່ອງກັບ ແຜນພັດທະນາລວມຂອງຂະແໜງພາສີ ແລະ ແຜນພັດທະນາບຸກຄະລາກອນຂອງຂະແໜງພາສີ ທັງໄລຍະສັ້ນ-ໄລຍະຍາວ.

5. ວຽກງານການສ້າງ ແລະ ປັບປຸງ ນິຕິກຳ ຂອງຂະແໜງການພາສີ ແມ່ນມີຄວາມຈຳເປັນຕ້ອງໄດ້ ພັດທະນາ ໃຫ້ມີລັກສະນະຄົບຊຸດ ແລະ ຮອບດ້ານ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດສັງຄົມ ແລະສອດຄ່ອງກັບພາກພື້ນ ແລະ ສາກົນ. ນອກຈາກນັ້ນ, ຍັງກາຍເປັນເຄື່ອງມືໃຫ້ແກ່ຂະແໜງພາສີ ໃນການຈັດເກັບລາຍຮັບ ແລະ ການເຄື່ອນໄຫວວຽກງານວິຊາສະເພາະ ຢ່າງມີປະສິດທິພາບ. ຄຽງຄູ່ກັນນີ້, ການສ້າງເວທີການພົບປະກັບພາກທຸລະກິດ ເພື່ອເປີດໂອກາດໃຫ້ການແລກປ່ຽນ ຂໍ້ມູນຂ່າວສານ ຮັບຟັງຄຳຄິດເຫັນ ແລະ ຂໍ້ສະເໜີຂອງພາກທຸກລະກິດ ເພື່ອນຳໄປຄົ້ນຄວ້າ ປັບປຸງບັນດານິຕິກຳຕ່າງໆ ໃນແຕ່ລະໄລຍະ, ແນໃສ່ ເພື່ອເຮັດໃຫ້ການດຳເນີນທຸລະກິດ ແລະ ການລົງທຶນ ໃນ ສປປ ລາວ ມີບັນຍາກາດທີ່ດີຂຶ້ນກວ່າເກົ່າ.

6. ວຽກງານການບັງຄັບໃຊ້ກົດໝາຍເປັນວຽກງານຫນຶ່ງທີ່ສຳຄັນ ຕ້ອງໄດ້ມີການພັດທະນາ ແລະ ຫັນເປັນວິຊາຊີບເປັນຕົ້ນວຽກງານຕ້ານສະກັດກັ້ນການລັກລອບໜີພາສີ, ວຽກງານກວດສອບຄືນການແຈ້ງພາສີ, ແລະ ວຽກງານກວດກາພາຍໃນ, ຊຶ່ງເປັນຕົວຕັດສິນໃນການປະຕິບັດວຽກງານວິຊາສະເພາະໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ທັງເປັນການຍູ້ແຮງໃຫ້ວຽກງານການຈັດເກັບລາຍຮັບ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ. ນອກຈາກນີ້, ຍັງເປັນການປະກອບສ່ວນ ໃນການເຄື່ອນໄຫວ ປົກປ້ອງຄວາມປອດໄພ ຂອງສັງຄົມ ເປັນຕົ້ນ ການສະກັດກັ້ນການຄ້າຂາຍຢາເສບຕິດ, ການຟອກເງິນ, ການປົກປ້ອງຊັບສິນທາງປັນຍາ, ອາວຸດເສິກ ແລະ ອື່ນໆ  ໂດຍສົມທົບກັບ ເຈົ້າໜ້າທີ່ຂະແໜງການກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານດັ່ງກ່າວ.

## ພາກທີ II: ແຜນພັດທະນາວຽກງານພາສີ ຮອດປີ 2020

### 1. ເປົ້າໝາຍ

**ເປົ້າໝາຍ ຂອງແຜນພັດທະນາວຽກງານພາສີ ຮອດປີ 2020, ມີຄື:**

- ເພີ່ມທະວີ ວຽກງານ ຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ມີຄວາມຊໍານານງານ ແລະ ເປັນມືອາຊີບ ດ້ານວິຊາສະເພາະ, ຄາດໝາຍສ້າງໃຫ້ໄດ້ ຜູ້ຊໍານານງານສະເພາະດ້ານ ຢ່າງໜ້ອຍ 1-2 ຄົນ.
- ຫລຸດຜ່ອນບັນດາ ຂັ້ນຕອນວຽກງານວິຊາສະເພາະ, ຫລຸດຜ່ອນດ້ານເວລາ, ນໍາໃຊ້ເຄື່ອງມືທີ່ທັນສະໄໝ ເພື່ອສ້າງກົນໄກ ໃນການຕິດຕາມຄຸ້ມຄອງ ການນໍາເຂົ້າ-ສົ່ງອອກ, ການບໍລິການຂອງຂະແໜງພາສີ ແລະ ການຄຸ້ມຄອງຖານຂໍ້ມູນ ໃຫ້ມີຄວາມເປັນລະບົບເອກະພາບ ໃນຂອບເຂດທົ່ວປະເທດ. ອີກທັງ ສົ່ງເສີມການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ, ຫລຸດຜ່ອນໄລຍະເວລາ ໃນການກວດປ່ອຍສິນຄ້າໃຫ້ໄດ້ 10% ຕໍ່ປີ.
- ເພີ່ມທະວີ ການປະສານສົມທົບ ແລະ ການຮ່ວມມື ກັບຂະແໜງການກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນເພື່ອສ້າງເງື່ອນໄຂ ໃຫ້ກົດໝາຍ ແລະ ລະບຽບການ ຂະແໜງພາສີ ຖືກຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ມີລັກສະນະກົມກຽວ ກັບຂະແໜງການກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ. ສົ່ງເສີມການ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງມີຈຸດສຸມ, ສາມາດໃຫ້ສັດຕະຍາບັນ ເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນ ຂອງອົງການຈັດຕັ້ງສາກົນຕ່າງໆ ເຊັ່ນ: ອົງການພາສີໂລກ, ອົງການການຄ້າໂລກ, ກຸ່ມປະເທດລຸ່ມແມ່ນໍ້າຂອງ (GMS) ແລະ ອາຊຽນ (ASEAN).
- ຮັບປະກັນ ນິຕິກໍາຂອງຂະແໜງການພາສີ ໃຫ້ມີລັກສະນະຄົບຊຸດ, ສອດຄ່ອງກັບພາກພື້ນ ແລະສາກົນ ເພື່ອເປົ້າໝາຍການຈັດເກັບລາຍຮັບໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ, ແນໃສ່ ໃຫ້ການຈັດເກັບລາຍຮັບຂອງຂະແໜງພາສີເພີ່ມຂຶ້ນ ຕາມຕົວເລກຄາດໝາຍແຜນການ ທີ່ກະຊວງການເງິນວາງໃຫ້ໃນແຕ່ລະໄລຍະ.
- ເພີ່ມທະວີ ການຄຸ້ມຄອງວຽກງານບັງຄັບໃຊ້ກົດໝາຍ ໃຫ້ມີຄວາມເຂັ້ມແຂງ, ຮັບປະກັນຄວາມສັກສິດຂອງກົດໝາຍ, ຍູ້ແຮງ ວຽກງານການຈັດເກັບລາຍຮັບ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ, ປະກອບສ່ວນ ປົກປ້ອງຄວາມປອດໄພຂອງສັງຄົມ.

### 2. ສະພາບແວດລ້ອມ ສາກົນ ແລະ ພາຍໃນປະເທດ

- **ຂໍ້ສະດວກ ແລະ ສິ່ງທ້າທາຍ ທີ່ເກີດຈາກ ສະພາບແວດລ້ອມສາກົນ**

- ພາຍໃຕ້ການປະຕິບັດທິດທາງນະໂຍບາຍຂອງພັກ-ລັດ, ໂດຍສະເພາະການເຊື່ອມໂຍງເສດຖະກິດ ແລະ ການຮ່ວມມືລະດັບພາກພື້ນ ແລະ ສາກົນ ທີ່ມີການຂະຫຍາຍຕົວເພີ່ມຂຶ້ນ ມີຫຼາຍຮູບແບບ ຫຼາຍລະດັບ ແລະ ມີການແຂ່ງຂັນສູງຂຶ້ນ, ຕົ້ນຕໍແມ່ນການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO) ແລະ ປະຊາຄົມເສດຖະກິດອາຊຽນ (AEC) ໄດ້ສ້າງໂອກາດເຮັດໃຫ້ການຄ້າ, ການລົງທຶນ ແລະ ການບໍລິການ ຢູ່ໃນສປປ ລາວ ມີການຂະຫຍາຍຕົວເພີ່ມຂຶ້ນ ສິ່ງຜົນໃຫ້ຮູບແບບການປະຕິບັດໜ້າທີ່ວຽກງານຂອງເຈົ້າໜ້າທີ່ພາສີ ຕ້ອງມີການປັບປຸງ ປ່ຽນແປງ ເພື່ອຮອງຮັບສະພາບການດັ່ງກ່າວ.
- ພາຍໃຕ້ສະພາບຄວາມຈໍາເປັນ ທີ່ ສປປ ລາວ ຈະຕ້ອງໄດ້ປະຕິບັດພັນທະອັນໜັກໜ່ວງ ເພື່ອປະກອບສ່ວນຂະຫຍາຍຕົວຂອງເສດຖະກິດໂລກ, ໃນນາມເປັນອົງກອນໜຶ່ງ ທີ່ປະຕິບັດໜ້າທີ່ບັງຄັບໃຊ້ກົດໝາຍ, ຈັດເກັບລາຍຮັບ ແລະ ອໍານວຍຄວາມສະດວກ ດ້ານການຄ້າ-ການລົງທຶນ, ກົມພາສີ ໄດ້ມີໂອກາດໃນການສຸມທຸກກໍາລັງແຮງ ຄົ້ນຫາທ່າແຮງບົ່ມຊ້ອນ ເພື່ອສະແດງບົດບາດຂອງຕົນ ໃນການປະກອບສ່ວນເຂົ້າໃນພາລະກິດຂອງຊາດ ໂດຍການປັບປຸງກົດໝາຍ, ລະບຽບການ, ຂັ້ນຕອນ, ຮູບແບບວິທີການເຮັດວຽກ, ການນໍາໃຊ້ອຸປະກອນທີ່ທັນສະໄໝ ລວມ

ທັງການພັດທະນາຂີດຄວາມສາມາດຂອງບຸກຄະລາກອນ ຂອງກົມພາສີ ເພື່ອປັບໂຕເຂົ້າກັບສະພາບ ແລະ ຮອງຮັບກັບສິ່ງທ້າທາຍ ຫລື ຄວາມກົດດັນ ທີ່ຈະເກີດຈາກການຄຸ້ມຄອງວຽກງານຢູ່ຕາມຊາຍແດນ ໄດ້ຢ່າງທັນເຫດການ.

- ຄຽງຄູ່ກັບໂອກາດທີ່ໄດ້ຮັບ ກົມພາສີ ຕ້ອງໄດ້ຮີບຮ້ອນແກ້ໄຂສິ່ງທ້າທາຍຫລາຍໆ ຢ່າງ ເຊັ່ນ: ບັນຫາຮູບແບບສະພາບການຄ້າຂາຍເຖື່ອນ, ການລັກລອບໜີພາສີ, ການເຄື່ອນໄຫວການຟອກເງິນ, ການສະໜອງເງິນ ໃຫ້ແກ່ຂະບວນການກໍ່ການຮ້າຍ ມີລັກສະນະສະລັບຊັບຊ້ອນຫລາຍຂຶ້ນ, ເຮັດໃຫ້ ກົມພາສີ ມີຄວາມຈໍາເປັນ ຕ້ອງໄດ້ຍົກລະດັບຂີດຄວາມສາມາດດ້ານວິຊາສະເພາະພາສີ ແລະ ທັກສະອື່ນໆ ຂອງເຈົ້າໜ້າທີ່ພາສີ ໃຫ້ມີຄວາມຫລາກຫລາຍ ແລະ ຊໍານານງານ, ພ້ອມທັງຈະຕ້ອງໄດ້ປັບປຸງຕາໜ່າງວຽກງານຕ້ານ ສະກັດກັ້ນ ການລັກລອບໜີພາສີ ໃຫ້ມີຄວາມເຂັ້ມແຂງຂຶ້ນກວ່າເກົ່າ.

- <u>**ຂໍ້ສະດວກ ແລະ ສິ່ງທ້າທາຍທີ່ເກີດຈາກ ສະພາບແວດລ້ອມພາຍໃນປະເທດ**</u>

- ພາຍໃຕ້ການກໍານົດວິໄສທັດຮອດປີ 2030 ແລະ ຍຸດທະສາດພັດທະນາການເງິນແຫ່ງລັດ ຮອດປີ 2025 ຂອງກະຊວງການເງິນ, ເປີດໂອກາດ ເຮັດໃຫ້ກົມພາສີ ສາມາດກໍານົດແຜນພັດທະນາຂະແໜງພາສີ ຮອດປີ 2020 ໄດ້ຢ່າງຊັດເຈນ ແລະ ມີຈຸດສຸມທີ່ແນ່ນອນຂຶ້ນ, ໂດຍຈະເນັ້ນໜັກ ຮັບປະກັນການເກັບລາຍຮັບງົບປະມານ ໃຫ້ຄົບຖ້ວນຕາມທ່າແຮງທີ່ບົ່ມຊ້ອນ ແລະ ຕາມລະບຽບກົດໝາຍກໍານົດ, ຫັນນະໂຍບາຍພາສີ-ອາກອນ ໃຫ້ມີຄວາມເປັນທໍາ ຕໍ່ທຸກພາກສ່ວນເສດຖະກິດ, ຊຸກຍູ້ສົ່ງເສີມການສ້າງຖານລາຍຮັບງົບປະມານເພີ່ມຂຶ້ນຢ່າງໝັ້ນຄົງ ຕາມທິດພັດທະນາສີຂຽວ ແລະ ຍືນຍົງ.

- ການເພີ່ມຂຶ້ນ ດ້ານບໍລິມາດຂອງການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ, ລວມທັງການເອົາໃຈໃສ່ຂອງບັນດາຂະແໜງການກ່ຽວຂ້ອງກັບ ການປະຕິບັດພັນທະ ຂອງ ສປປ ລາວ ທີ່ມີຕໍ່ພາກພື້ນ ແລະ ສາກົນ ໂດຍສະເພາະ ທີ່ກ່ຽວກັບການສ້າງເງື່ອນໄຂອໍານວຍຄວາມສະດວກດ້ານການຄ້າ, ເຮັດໃຫ້ ກົມພາສີ ຕ້ອງໄດ້ຫັນປ່ຽນພາລະບົດບາດຂອງຕົນ ໂດຍເອົາໃຈໃສ່ປະຕິບັດ 2 ໜ້າທີ່ ຕົ້ນຕໍ ຄື: ການອໍານວຍຄວາມສະດວກດ້ານການຄ້າ ແລະ ການບັງຄັບໃຊ້ກົດໝາຍ ຄວບຄູ່ກັນໄປ, ຊຶ່ງປັດໃຈເຫລົ່ານີ້ ໄດ້ກາຍເປັນສິ່ງທ້າທາຍອັນໃຫຍ່ຫລວງ ໃຫ້ແກ່ກົມພາສີ ທີ່ຈະຕ້ອງໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ຕໍ່ວຽກງານການສ້າງຂີດຄວາມສາມາດຂອງອົງກອນ, ການປັບປຸງບັນດາລະບຽບການ, ຂັ້ນຕອນ , ແລະ ການນໍາໃຊ້ເຄື່ອງມືທີ່ທັນສະໄໝ ເພື່ອຮັບໃຊ້ວຽກງານວິຊາສະເພາະອັນໜັກໜ່ວງ ໃນໄລຍະໃໝ່.

- ອີງໃສ່ສະພາບການຕົວຈິງໃນປະຈຸບັນ ເຫັນວ່າ ການສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດາລະບຽບການຂອງຂະແໜງພາສີ ແມ່ນຍັງບໍ່ທັນຕອບສະໜອງໄດ້ ກັບສະພາບການປ່ຽນແປງທາງດ້ານການຄ້າ ແລະ ການລົງທຶນ ໃນແຕ່ລະໄລຍະ, ສິ່ງພົນເຮັດໃຫ້ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ບາງໜ້າວຽກ ຂອງຂະແໜງພາສີ ແມ່ນຍັງບໍ່ທັນບັນລຸໄດ້ຕາມມາດຕະຖານ ແລະ ລະບຽບການສາກົນ ເປັນຕົ້ນ: ການບໍລິຫານຄວາມສ່ຽງ,ການຢັ້ງຢືນຮັບຮອງລ່ວງໜ້າ, ການສະເໜີຄືນດ້ານພາສີ, ການກວດສອບຄືນການແຈ້ງພາສີ, ແລະ ອື່ນໆ.

- ຜ່ານການຕີລາຄາ ຂີດຄວາມສາມາດຂອງ ພະນັກງານພາສີ ນັບແຕ່ສູນກາງ ລົງຮອດທ້ອງຖິ່ນ ເຫັນວ່າຍັງມີຈໍານວນຫລວງຫລາຍ ທີ່ມີຂໍ້ຈໍາກັດ ດ້ານຄວາມຮູ້ ຄວາມສາມາດ ຄວາມຊໍານານງານ ດ້ານເຕັກນິກວິຊາສະເພາະ ໃນການປະຕິບັດວຽກງານ ໃນໄລຍະໃໝ່ ເປັນຕົ້ນ: ກົດໝາຍ ແລະ ລະບຽບການ ຂອງຂະແໜງພາສີ, ວຽກງານໄອທີ, ພາສາຕ່າງປະເທດ. ນອກຈາກນັ້ນ, ການລົງທຶນເຂົ້າໃນການພັດທະນາລະບົບ ແລະ ເຄື່ອງມື ທັນສະໄໝ ຮັບໃຊ້ການປະຕິບັດວຽກງານວິຊາສະເພາະພາສີ ຫລາຍໆດ້ານ ແມ່ນຍັງບໍ່ທັນເປັນລະບົບຄົບຊຸດ ແລະ ບໍ່ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການ ຂອງວຽກງານຕົວຈິງໃນການອໍານວຍຄວາມສະດວກ, ຄຸ້ມຄອງ, ກວດກາ, ຕິດຕາມ ແລະ ປະເມີນຜົນວຽກງານວິຊາສະເພາະຂອງຂະແໜງພາສີ.

- ອີກສິ່ງທ້າທາຍໜຶ່ງ ທີ່ກົມພາສີ ຕ້ອງໄດ້ເອົາໃຈໃສ່ ແກ້ໄຂ ຢ່າງຕັ້ງໜ້າ ແມ່ນ ການປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ຕິດຕາມ ການເຄື່ອນໄຫວວຽກງານຕ້ານ ແລະ ສະກັດກັ້ນ ການລັກລອບໜີພາສີ

, ການຄ້າຂາຍເຄື່ອນ ແລະ ການກໍ່ສ້າງ ພະນັກງານພາສີ ທີ່ປະຈໍາຢູ່ແຕ່ລະທ້ອງຖິ່ນ, ການປະສານສົມທົບ ກັບຂະແໜງການກ່ຽວຂ້ອງ ພາຍໃນປະເທດ ກ່ຽວກັບ ການປະຕິບັດວຽກງານວິຊາສະເພາະຂອງຂະແໜງພາສີ ເພື່ອຄວາມເປັນເອກະພາບ ແລະ ສ້າງຄວາມກົມກຽວ, ການສ້າງກົນໄກການຮ່ວມມື ກັບພາກທຸລະກິດ ໃຫ້ມີໝາກຜົນ ເປັນຮູບປະທໍາ ຫລາຍຂຶ້ນກວ່າເກົ່າ, ລວມທັງ ການຮ່ວມມື ກັບຕ່າງປະເທດໃຫ້ມີລັກສະນະຄົບຊຸດ, ມີຈຸດສຸມທີ່ແນ່ນອນ, ຫລີກລ່ຽງການຮ່ວມມືທີ່ຊໍ້າຊ້ອນ, ແນໃສ່ ເພື່ອຍາດແຍ່ງເອົາຜົນປະໂຫຍດຈາກການຮ່ວມມືດັ່ງກ່າວໃຫ້ປະກົດຜົນເປັນຮູບປະທໍາທີ່ຊັດເຈນ.

## 3. ວິໄສທັດ, ພາລະກິດ, ຄ່ານິຍົມ ຂອງຂະແໜງພາສີ ໃນປີ 2020

- **ວິໄສທັດ:**

ມຸ່ງໝັ້ນ ພັດທະນາອົງກອນ ໃຫ້ທັນສະໄໝ, ໃຫ້ບໍລິການດ້ານວິຊາສະເພາະພາສີ ທີ່ໄດ້ມາດຕະຖານຂອງອົງການພາສີໂລກ, ປະກອບສ່ວນໃນການພັດທະນາເສດຖະກິດຂອງຊາດ ແລະ ເຊື່ອມໂຍງກັບສາກົນ.

- **ພາລະກິດ** :

1. ເປັນເຈົ້າການໃນການຈັດເກັບລາຍຮັບ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາ;
2. ຮັບປະກັນການໃຫ້ບໍລິການດ້ານວິຊາສະເພາະພາສີ ຢ່າງເປັນມືອາຊີບ;
3. ປົກປ້ອງ ແລະ ຮັບປະກັນຄວາມປອດໄພຂອງສັງຄົມ;
4. ອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ;
5. ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

- **ຄ່ານິຍົມ** :

1. **ຄວາມໂປ່ງໃສ :**

ພວກເຮົາ ສະໜັບສະໜູນ ຄວາມເປັນເຈົ້າການໃນການນໍາພາ ແລະ ການດໍາເນີນງານ ທີ່ມີຄວາມໂປ່ງໃສ ຊື່ສັດສຸດຈະລິດ ໃນທຸກໆການປະຕິບັດວຽກງານຂອງຂະແໜງພາສີ.

2. **ຄວາມຮັບຜິດຊອບສູງ:**

ພວກເຮົາ ສະໜັບສະໜູນ ການສະແດງທັດສະນະ ທີ່ມີຄວາມຮັບຜິດຊອບ ຕໍ່ໜ້າກົດໝາຍ ສໍາລັບການກະທໍາ ແລະ ການຕັດສິນໃຈ ພາຍໃຕ້ຂອບເຂດຄວາມຮັບຜິດຊອບ ຂອງກົມພາສີ.

3. **ຄວາມທ່ຽງທໍາ:**

ພວກເຮົາ ສົ່ງເສີມ ນໍາສະເໜີວິທີການແກ້ໄຂບັນຫາ ຕໍ່ກະຊວງການເງິນ ດ້ວຍຄວາມເປັນກາງ, ຊື່ສັດ, ທັນສະພາບການ ແລະ ອີງໃສ່ຫລັກຖານທີ່ມີຢູ່. ພວກເຮົາ ໃຫ້ຄວາມສໍາຄັນ ແລະ ເຄົາລົບ ຕໍ່ສິດທິ ແລະ ປະເພນີ ຂອງບຸກຄົນ ທຸກເຊື້ອຊາດ ແລະສາດສະໜາ.

4. **ຄວາມຊໍານານງານ:**

ພວກເຮົາ ໃຫ້ຄວາມສໍາຄັນ ຕໍ່ການປະຕິບັດວຽກງານ ດ້ວຍທັດສະນະຄະຕິ ແລະ ພຶດຕິກໍາທີ່ສ້າງສັນ, ມີປະສິດທິພາບ, ຍຶດໝັ້ນ ໃນມາດຕະຖານດ້ານວິຊາສະເພາະພາສີ ທີ່ກົດໝາຍ ແລະ ລະບຽບການ ໄດ້ກໍານົດ, ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຜົນໄດ້ຮັບທີ່ດີທີ່ສຸດໃຫ້ແກ່ສັງຄົມ ແລະ ປະເທດຊາດ.

5. **ຄວາມທັນສະໄໝ:**

ພວກເຮົາ ສົ່ງເສີມການປະຕິບັດວຽກງານວິຊາສະເພາະພາສີ ໂດຍນໍາໃຊ້ ຫລັກການ, ວິທີການ, ເຄື່ອງມື ແລະ ເຕັກໂນໂລຊີ ທີ່ທັນສະໄໝ ທີ່ດີທີ່ສຸດ ຕາມມາດຕະຖານສາກົນ.

6. ຄວາມເອກະພາບເປັນໝູ່ຄະນະ:

ພວກເຮົາ ສົ່ງເສີມ ການເຮັດວຽກ ຢ່າງມີແບບແຜນ ເປັນໝູ່ຄະນະ ດ້ວຍຄວາມຮັບຜິດຊອບສູງ, ມີການແບ່ງງານ ແລະ ຍົກສູງຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ເພື່ອນໍາພາອົງກອນກ້າວໄປສູ່ຜົນສໍາເລັດ ໃນແຕ່ລະໄລຍະ.

## 4. ແຜນພັດທະນາ ຕົ້ນຕໍ ຂອງລັດຖະການພາສີ ຮອດປີ 2020 ປະກອບມີ:

❖ **ແຜນພັດທະນາຍ່ອຍ ທີ 1:** ປັບປຸງການຄຸ້ມຄອງ ແລະ ການບໍລິຫານອົງກອນພາສີ ໃຫ້ທັນສະໄໝ, ພ້ອມທັງພັດທະນາບຸກຄະລາກອນ ຂອງຂະແໜງພາສີ ໃຫ້ມີຄວາມໜັກແໜ້ນ ທາງດ້ານຄຸນທາດການເມືອງ, ມີຈັນຍາບັນຈັນຍາທໍາ, ແລະ ມີຄວາມຮູ້ຄວາມສາມາດດານວິຊາສະເພາະພາສີ ໃນລະດັບທີ່ແນ່ນອນ ກ້າວໄປເຖິງ ມີຄວາມຊໍານານງານ ແລະ ເປັນມືອາຊີບ ດ້ານວິຊາສະເພາະ.

1.1 ປັບປຸງ ກົນໄກການຄຸ້ມຄອງ ແລະ ການບໍລິຫານອົງກອນ ໃຫ້ທັນສະໄໝ ເທື່ອລະກ້າວ.

1.2 ການຄຸ້ມຄອງ ແລະ ພັດທະນາບຸກຄະລາກອນ ຂະແໜງພາສີ ໃຫ້ມີຄວາມໜັກແໜ້ນດ້ານຄຸນທາດການເມືອງ, ມີຈັນຍາບັນຈັນຍາທໍາ ທີ່ດີ, ມີຄວາມເຂັ້ມແຂງດ້ານວິຊາສະເພາະພາສີ ແລະ ຄວາມຮູ້ດ້ານອື່ນໆ.

❖ **ແຜນພັດທະນາຍ່ອຍ ທີ 2:** ການທັນພາສີເປັນທັນສະໄໝ ຢ່າງເປັນລະບົບຄົບຊຸດ ເພື່ອຍົກສູງການຄຸ້ມຄອງຂະ ແໜງການພາສີ ໃຫ້ມີສັກກະຍະພາບ ແລະ ຮັບປະກັນປະສິດທິຜົນ ໃນຂອບເຂດທົ່ວປະເທດ.

2.1 ການພັດທະນາລະບົບ ເພື່ອຄຸ້ມຄອງການເກັບລາຍຮັບ ຂອງຂະແໜງພາສີ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກໍານົດເວລາ.

2.2 ຫັນກົນໄກການຄຸ້ມຄອງ ວຽກງານວິຊາສະເພາະຂອງຂະແໜງພາສີ ໃຫ້ທັນສະໄໝຮອບດ້ານ ສາມາດເຊື່ອມໂຍງກັບພາກພື້ນ

❖ **ແຜນພັດທະນາຍ່ອຍ ທີ 3:** ການຮ່ວມມືພາຍໃນ ແລະ ຕ່າງປະເທດ ໃນລັກສະນະແບບມີຈຸດສຸມ ແນໃສ່ເພື່ອເຮັດໃຫ້ກົດໝາຍ ແລະ ລະບຽບການພາສີ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີລັກສະນະກົມກຽວ ກັບຂະແໜງການອື່ນໆ.

3.1 ເພີ່ມທະວີ ການຮ່ວມມືກັບ ຂະແໜງການພາກລັດທີ່ກ່ຽວຂ້ອງ ແລະ ປະສານສົມທົບກັບ ອົງການປົກຄອງ ທ້ອງຖິ່ນ.

3.2 ເພີ່ມທະວີ ການມີສ່ວນຮ່ວມຂອງພາກທຸລະກິດ ໃນການປັບປຸງຂັ້ນຕອນການດໍາເນີນງານຂອງພາສີ.

3.3 ເພີ່ມທະວີ ການຮ່ວມມື ກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນ.

❖ **ແຜນພັດທະນາຍ່ອຍ ທີ 4:** ການສ້າງ, ປັບປຸງ ນິຕິກໍາ ຂອງຂະແໜງການພາສີ ໃຫ້ມີລັກສະນະຄົບຊຸດ, ສອດຄ່ອງກັບພາກພື້ນ ແລະ ສາກົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຮັບປະກັນຄວາມເຂັ້ມແຂງໃຫ້ແກ່ການປະຕິບັດມາດຕະການ ບັງຄັບໃຊ້ກົດໝາຍ ໃຫ້ມີຄວາມສັກສິດ, ຍຸດຕິທໍາ ແລະ ໂປ່ງໃສ ແນໃສ່ສ້າງເງື່ອນໄຂໃນການຈັດເກັບລາຍຮັບ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ, ແລະ ປະກອບສ່ວນ ປົກປ້ອງ ຄວາມປອດໄພ ຂອງສັງຄົມ.

4.1 ສ້າງ ແລະ ປັບປຸງ ບັນດານິຕິກໍາ ຂອງຂະແໜງພາສີ ໃຫ້ສອດຄ່ອງກັບສະພາບ ການຂະຫຍາຍຕົວ ດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

4.2 ການປະຕິບັດມາດຕະການບັງຄັບໃຊ້ກົດໝາຍ.

## ພາກທີ III: ເນື້ອໃນລະອຽດຂອງແຜນພັດທະນາ ຂະແໜງພາສີ ຮອດປີ 2020

ລັດຖະການພາສີ ໄດ້ກຳນົດທິດທາງ ໃນການພັດທະນາຂະແໜງພາສີ ໃຫ້ທັນພາສີເປັນທັນສະໄໝ ພາຍໃນປີ 2020 ໂດຍກຳນົດໃຫ້ມີແຜນພັດທະນາຍ່ອຍ ທັງໝົດ 4 ແຜນ, ດັ່ງລາຍລະອຽດລຸ່ມນີ້:

❖ **ແຜນພັດທະນາຍ່ອຍ ທີ 1:** ປັບປຸງການຄຸ້ມຄອງ ແລະ ການພັດທະນາບຸກຄະລາກອນ ຂອງຂະແໜງພາສີ ໃຫ້ມີຄວາມໜັກແໜ້ນທາງດ້ານຄຸນທາດການເມືອງ, ມີຈັນຍາບັນ-ຈັນຍາທຳທີ່ດີ, ແລະ ມີຄວາມຮູ້ຄວາມສາມາດດານວິຊາສະເພາະພາສີ ໃນລະດັບທີ່ແນ່ນອນ ກ້າວໄປເຖີງ ມີຄວາມຊຳນານງານ ແລະ ເປັນມືອາຊີບ ດ້ານວິຊາສະເພາະ.

- **ເປົ້າໝາຍ:**

  ແນໃສ່ ຫັນກົນໄກການຄຸ້ມຄອງບຸກຄະລາກອນ ໃຫ້ທັນສະໄໝ ເທື່ອລະກ້າວ, ມີການແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງ, ຈັດວາງພະນັກງານໄປຕາມກຳນົດຕຳແໜ່ງງານ ຮັບປະກັນໄດ້ທັງຄຸນນະພາບ ແລະ ປະລິມານ. ນອກນັ້ນ, ຕ້ອງກໍ່ສ້າງພະນັກງານພາສີ ຕາມທິດຫັນເປັນໜຸ່ມເທື່ອລະກ້າວ ໂດຍເນັ້ນໜັກ ຄວາມເຂັ້ມແຂງດ້ານຄຸນທາດການເມືອງ, ມີຈັນຍາບັນ ຈັນຍາທຳ ທີ່ດີ, ມີຄວາມເຂັ້ມແຂງດ້ານວິຊາສະເພາະ, ມີຄວາມສາມາດຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ໄດ້ດີ, ມີຄວາມພ້ອມຕໍ່ການປ່ຽນແປງທີ່ເກີດຂຶ້ນ ຫລື ຈະເກີດຂຶ້ນໃນແຕ່ລະໄລຍະ; ມີຄວາມສາມາດນຳໃຊ້ເຕັກໂນໂລຊີ ແລະ ພາສາຕ່າງປະເທດ ເຂົ້າໃນການປະຕິບັດ ວຽກງານທີ່ຕົນຮັບຜິດຊອບຢ່າງເໝາະສົມ; ມີຄວາມຮູ້, ຄວາມສາມາດໃນການຄຸ້ມຄອງບໍລິຫານລັດ, ຮູ້ທັນສະພາບການຂອງພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ.

- **ແຜນວຽກຈຸດສຸມຂອງແຜນພັດທະນາຍ່ອຍ ທີ 1:**

  1.1 ປັບປຸງກົນໄກການຄຸ້ມຄອງ ແລະ ການບໍລິຫານອົງກອນພາສີ ໃຫ້ທັນສະໄໝ.

  1.2 ການຄຸ້ມຄອງ ແລະ ພັດທະນາ ບຸກຄະລາກອນພາສີ ໃຫ້ມີຄວາມໜັກແໜ້ນດ້ານຄຸນທາດການເມືອງ, ມີຈັນຍາບັນ ຈັນຍາທຳ ທີ່ດີ, ມີຄວາມເຂັ້ມແຂງດ້ານວິຊາສະເພາະພາສີ ແລະ ຄວາມຮູ້ດ້ານອື່ນໆ.

ສະພາບປະຈຸບັນ ການປະສານງານ ຂອງຂັ້ນສູນກາງ ທ້ອງຖິ່ນ ຍັງບໍ່ທັນມີລັກສະນະລວມສູນ ແລະ ບໍ່ທັນສະພາບການ, ການມອບສິດໃນການຕັດສິນໃຈຂອງຂັ້ນທ້ອງຖິ່ນບໍ່ທັນຊັດເຈນ ເຮັດໃຫ້ການແກ້ໄຂ ຫລາຍໆບັນຫາ ມີລັກສະນະແກ່ຍາວ ບໍ່ທັນສະພາບການ ກໍ່ໃຫ້ເກີດສຽງວິພາກວິຈານຈາກສັງຄົມ. ສະນັ້ນ, ກົມພາສີມີຄວາມຈຳເປັນຕ້ອງໄດ້ປັບປຸງລະບົບການບໍລິຫານຈັດການ ລະຫວ່າງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີການແບ່ງຂອບເຂດພາລະບົດບາດ ຢ່າງລະອຽດຊັດເຈນ.

ວຽກງານການຄຸ້ມຄອງ ແລະ ພັດທະນາ ບຸກຄະລາກອນ ຂອງລັດຖະການພາສີ ສປປ ລາວ ຖືວ່າເປັນໝາກຫົວໃຈທີ່ຈະຂັບເຄື່ອນວຽກງານວິຊາສະເພາະ ຂອງຂະແໜງພາສີ ທັງເປັນປັດໃຈໃນການຕັດສິນຜົນສຳເລັດຂອງວຽກງານຂະແໜງພາສີ. ໃນໄລຍະຜ່ານມາ ບຸກຄະລາກອນຂອງຂະແໜງພາສີ ສ່ວນຫລາຍ ຍັງຂາດຄວາມຮູ້, ຄວາມຊຳນານງານ, ໂດຍສະເພາະການນຳໃຊ້ເຄື່ອງແລະ ລະບົບທີ່ທັນສະໄໝເຂົ້າໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະບາງດ້ານ ເຊັ່ນ ການກຳນົດມູນຄ່າແຈ້ງ, ການຈັດລະຫັດສິນຄ້າ ລວມເຖິງ ພາສາຕ່າງປະເທດ ຍັງມີລັກສະນະຈຳກັດ ແລະ ການປະຕິບັດງານຍັງເປັນລັກສະນະຄອງເດີມ.

ວຽກງານການພັດທະນາບຸກຄະລາກອນ ໃນໄລຍະຜ່ານມາ ສ່ວນຫລາຍແມ່ນໄດ້ຮັບການຊ່ວຍເຫລືອທາງດ້ານວິຊາການ ແລະ ທຶນຮອນຈາກຕ່າງປະເທດ ເພື່ອຈັດຝຶກອົບຮົມໃນແຕ່ລະຄັ້ງ.

ທິດທາງແຜນການໃນຕໍ່ໜ້າ ກົມພາສີ ເຫັນວ່າ ມີຄວາມຈຳເປັນຮີບດ່ວນ ໃນພັດທະນາຂີດຄວາມສາມາດ ຂອງພະນັກງານພາສີ ແຕ່ລະລຸ້ນ ເພື່ອຮັບປະກັນຄຸນນະພາບ ໃນການປະຕິບັດວຽກງານ ໃຫ້ມີປະສິດທິພາບ ປະສິດທິຜົນ

ແລະ ສ້າງຜູ້ຊໍານານງານໃນອານາຄົດ. ພະນັກງານພາສີ ທັງໝົດ ໃນຂອບເຂດທົ່ວປະເທດ ຈໍາເປັນຕ້ອງໄດ້ຮັບການຝຶກອົບຮົມດ້ານເຕັກນິກວິຊາສະເພາະ ຢ່າງເປັນປົກກະຕິ. ໃນນັ້ນ, ຈະສຸມໃສ່ ການຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່ ທີ່ເຮັດໜ້າທີ່ວຽກງານກວດກາສິນຄ້າ, ວຽກງານກວດສອບຄືນການແຈ້ງພາສີ, ວຽກງານຄຸ້ມຄອງການແຈ້ງພາສີ ແລະ ການນໍາໃຊ້ເຄື່ອງມືທັນສະໄໝ. ນອກນັ້ນ, ພະນັກງານທີ່ພາສີ ແຕ່ຕໍາແໜ່ງບໍລິຫານ ປະເພດ 4-6 ຕ້ອງໄດ້ເຂົ້າຝຶກອົບຮົມ ຫົວຂໍ້ພາວະການເປັນຜູ້ນໍາ.

| **ແຜນພັດທະນາທີ່ຍ່ອຍ ທີ 1 ຂອງກົມພາສີ** | **ປັບປຸງການຄຸ້ມຄອງ ແລະ ການພັດທະນາບຸກຄະລາກອນ ຂອງຂະແໜງພາສີ** | **ຍຸດທະສາດການພັດທະນາການເງິນພາກລັດ (PFDS) ຮອດປີ 2025** | **ເປົ້າໝາຍ PFDS** |
|---|---|---|---|
| **ໜ້າວຽກຈຸດສຸມ 1.1** | ປັບປຸງກົນໄກການຄຸ້ມຄອງ ແລະ ການບໍລິຫານ ອົງກອນພາສີ ໃຫ້ທັນສະໄໝ. | **ຍຸດທະສາດທີ 5:** ພັດທະນາການຈັດຕັ້ງ ແລະບຸກຄະລາກອນ ໃຫ້ມີຄວາມຮູ້ຄວາມສາມາດແລະໜັກແໜ້ນທາງດ້ານການເມືອແນວຄິດ. | ແນໃສ່ ຫັນກົນໄກການຄຸ້ມຄອງບຸກຄະລາກອນ ໃຫ້ທັນສະໄໝ ເທື່ອລະກ້າວ, ມີການແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງ,ຈັດວາງພະນັກງານໄປຕາມກໍານົດຕໍາ ແໜ່ງງານ ຮັບປະກັນໄດ້ທັງຄຸນນະພາບ ແລະ ປະລິມານ.ປັບປຸງກົງຈັກການຈັດຕັ້ງຂອງຂະແໜງການເງິນ.ສ້າງພະນັກງານ-ລັດຖະກອນ ທຸກປະເພດ ຕາມທິດທັນເປັນໝຸ່ມ ເທື່ອລະກ້າວ ແລະ ເຂັ້ມແຂງດ້ານ ຄຸນທາດການເມືອງໜັກແໜ້ນ, ຈັນຍາບັນ, ຈັນຍາທໍາທີ່ດີ; ມີຄວາມເຂັ້ມແຂງດ້ານວິຊາສະເພາະ, ວິຊາການ; ມີຄວາມສາມາດຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ໄດ້ດີ; ພ້ອມຮັບກັບການປ່ຽນແປງທີ່ເກີດຂຶ້ນ ຫລື ຈະເກີດຂຶ້ນ; ມີຄວາມສາມາດນໍາໃຊ້ເຕັກໂນໂລຊີ ແລະ ພາສາຕ່າງປະເທດ ເຂົ້າໃນການປະຕິບັດ ວຽກງານທີ່ຕົນຮັບຜິດຊອບຢ່າງເໝາະສົມ; ມີຄວາມຮູ້, ຄວາມສາມາດໃນການຄຸ້ມຄອງບໍລິຫານລັດ, ຮູ້ທັນສະພາບການຂອງພາກພື້ນ ແລະ ສາກົນໃນແຕ່ລະໄລຍະ. |
| **ໜ້າວຽກຈຸດສຸມ 1.2** | ການຄຸ້ມຄອງ ແລະ ພັດທະນາ ບຸກຄະລາກອນພາສີ ໃຫ້ມີຄວາມໜັກແໜ້ນດ້ານຄຸນທາດການເມືອງ, ມີຈັນຍາບັນ ຈັນຍາທໍາ ທີ່ດີ, ມີຄວາມເຂັ້ມແຂງດ້ານວິຊາສະເພາະພາສີ ແລະ ຄວາມຮູ້ດ້ານອື່ນໆ. | | |

| ໜ້າວຽກຈຸດສຸມຂອງ ແຜນພັດທະນາຍ່ອຍ ທີ 1 | 2019 | 2020 |
|---|---|---|
| **1.1 ປັບປຸງກົນໄກການຄຸ້ມຄອງ ແລະ ການບໍລິຫານອົງກອນພາສີ ໃຫ້ທັນສະໄໝ.** | | |
| 1.1.1 ຫັນເອົາວຽກງານວິຊາສະເພາະທີ່ກົມພາສີຄຸ້ມຄອງໃນປະຈຸບັນ ໃຫ້ແກ່ບັນດາກອງຄຸ້ມຄອງພາສີ ແລະ ດ່ານພາສີຊາຍແດນ ເປັນຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດເປັນຕົ້ນ:ວຽກງານຄຸ້ມຄອງການລົງທຶນ, ວຽກງານຄຸ້ມຄອງແຫລ່ງກໍາເນີດສິນຄ້າ, ວຽກງານຄຸ້ມຄອງສິນຄ້ານໍາເຂົ້າເພື່ອສົ່ງອອກ ແລະ ອື່ນໆ ຕາມເງື່ອນໄຂທີ່ເໝາະສົມ. | X | X |
| 1.1.2 ສ້າງມາດຖານໃນການໃຫ້ບໍລິການດ້ານພາສີ (Customs Client Service) ຂອງລັດຖະການພາສີ ແຕ່ລະຂັ້ນ. | | X |
| 1.1.3 ພັດທະນາເຄື່ອງມືທັນສະໄໝ ເພື່ອຕິດຕາມການບໍລິຫານງານຂອງອົງກອນ ເປັນຕົ້ນ: ການບໍລິການທາງດ້ານເອກະສານ. | | X |
| 1.1.4 ສ້າງຕັ້ງສູນບໍລິການ ເພື່ອໃຫ້ຄໍາແນະນໍາ ແກ່ສັງຄົມ ກ່ຽວກັບລະບຽບການ ແລະ ຂັ້ນຕອນ ທາງພາສີ ໃນການນໍາເຂົ້າ, ສົ່ງອອກ ແລະ ຜ່ານແດນສິນຄ້າເຄື່ອງຂອງ. | | X |
| 1.1.5 ພັດທະນາ ແລະ ນໍາໃຊ້ ລະບົບຄຸ້ມຄອງພະນັກງານ (ບັນຊີ-ການເງິນ, ພັດສະດຸ, ແບບພິມ ແລະ ອື່ນໆ) ຂອງລັດຖະການພາສີ. | X | X |
| **1.2 ການຄຸ້ມຄອງ ແລະ ພັດທະນາ ບຸກຄະລາກອນພາສີ ໃຫ້ມີຄວາມໜັກແໜ້ນດ້ານຄຸນທາດການເມືອງ, ມີຈັນຍາບັນ ຈັນຍາທໍາ ທີ່ດີ, ມີຄວາມເຂັ້ມແຂງດ້ານວິຊາສະເພາະພາສີ ແລະ ຄວາມຮູ້ດ້ານອື່ນໆ.** | | |
| 1.2.1 ກໍານົດບູລິມະສິດ ການຄຸ້ມຄອງ ພະນັກງານພາສີ ຢ່າງມີຈຸດສຸມ | | |
| - ນໍາໃຊ້ໂປຼແກມທັນສະໄໝ ໃນການເກັບກໍາຂໍ້ມູນປະຫວັດ ແລະ ການເຄື່ອນໄຫວຂອງບຸກຄະລາກອນຂະແໜງ ການພາສີ ໃນຂອບເຂດທົ່ວປະເທດ. | X | X |
| - ກໍານົດຕົວຊີ້ວັດ ເພື່ອປະເມີນຜົນການດໍາເນີນງານຂອງພະນັກງານແຕ່ລະຄົນ ໃຫ້ມີລັກສະນະສາມາດຈັດຕັ້ງປະຕິບັດໄດ້ ແລະ ສົມເຫດສົມຜົນກັບສະພາບເງື່ອນໄຂຄວາມເປັນຈິງ. | X | X |
| - ກໍານົດລາຍລະອຽດໜ້າທີ່ຮັບຜິດຊອບ, ມາດຖານເງື່ອນໄຂ ດ້ານຄຸນທາດການເມືອງ,ຈັນຍາບັນ-ຈັນຍາທໍາ, ຄວາມຮູ້ຄວາມສາມາດດ້ານວິຊາສະເພາະ ຂອງແຕ່ລະຕໍາແໜ່ງງານ ໃຫ້ແທດເໝາະກັບສະພາບຄວາມຮຽກຮ້ອງຕ້ອງການຕົວຈິງ ແລະ ສາມາດປະຕິບັດໄດ້ ເພື່ອປະກອບໃສ່ໂຄງປະກອບການຈັດຕັ້ງຂອງຂະແໜງພາສີໃນຂອບເຂດທົ່ວປະເທດ. | X | X |
| - ສົມທົບກັບ ກົມຈັດຕັ້ງ ປັບປຸງລະບຽບການຄຸ້ມຄອງ, ຊັບຊ້ອນໝູນວຽນ ພະນັກງານ ໄປຕາມມາດຖານ ຂອງການກໍານົດຕໍາແໜ່ງງານ. | | X |
| 1.2.2 ກໍານົດບູລິມະສິດ ວຽກງານການພັດທະນາບຸກຄະລາກອນພາສີ ຢ່າງມີຈຸດສຸມ | | |
| - ພັດທະນາຫລັກສູດການສິດສອນ ຕາມຂະແໜງວິຊາຊີບຂອງພາສີ ເປັນຕົ້ນ ວຽກງານຄຸ້ມຄອງການແຈ້ງພາສີ, ວຽກງານກວດສອບຄືນການແຈ້ງພາສີ, ວຽກງານສືບສວນ-ສອບສວນ ແລະ ການປາບປາມ ການລັກລອບໜີພາສີ. ນອກນັ້ນ, ຕ້ອງໄດ້ເພີ່ມການສິດສອນ ດ້ານຄຸນທາດການເມືອງ, ຈັນຍາບັນ ຈັນຍາທໍາ ທີ່ດີ, ທັກສະໃນການຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ, ມີຄວາມສາມາດໃນການປັບໂຕຕໍ່ການປ່ຽນແປງທີ່ເກີດຂຶ້ນ ຫລື ຈະເກີດຂຶ້ນໃນ | X | X |

| | | |
|---|---|---|
| ແຕ່ລະໄລຍະ; ມີຄວາມສາມາດນຳໃຊ້ເຕັກໂນໂລຊີ ແລະ ພາສາຕ່າງປະເທດ ສຳລັບການປະຕິບັດວຽກງານທີ່ຕົນຮັບຜິດຊອບຢ່າງເໝາະສົມ. | | |
| - ປະສານສົມທົບ ກັບສະຖາບັນເສດຖະກິດ-ການເງິນ ຂອງກະຊວງການເງິນໃນການຈັດຝຶກອົບຮົມ, ແລະ ປັບປຸງຂະແໜງຄຸ້ມຄອງການຝຶກອົບຮົມໃຫ້ມີຄວາມເຂັ້ມແຂງ ແນໃສ່ໃຫ້ສາມາດດຳເນີນການຈັດຝຶກອົບຮົມ ແຕ່ລະຫລັກສູດຢ່າງເປັນລະບົບຕໍ່ເນື່ອງ. | x | x |

❖ **<u>ແຜນພັດທະນາຍ່ອຍ ທີ 2:</u>** ການທັນພາສີເປັນທັນສະໄໝ ຢ່າງເປັນລະບົບຄົບຊຸດ ເພື່ອຍົກສູງການຄຸ້ມຄອງຂະແໜງການພາສີ ໃຫ້ມີສັກກະຍະພາບ ແລະ ຮັບປະກັນປະສິດທິຜົນ ໃນຂອບເຂດທົ່ວປະເທດ.

- **<u>ເປົ້າໝາຍ:</u>**
  ແນໃສ່ພັດທະນາລະບົບ ແລະ ນຳໃຊ້ເຄື່ອງມືທີ່ທັນສະໄໝ ເພື່ອຄຸ້ມຄອງການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານ ຂອງຂະແໜງການພາສີ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ; ທັນກົນໄກການຄຸ້ມຄອງວຽກງານວິຊາສະເພາະຂອງຂະແໜງພາສີ ໃຫ້ທັນສະໄໝຮອບດ້ານ ທຽບທັນກັບພາກພື້ນ.

- **<u>ແຜນວຽກຈຸດສຸມ ຂອງແຜນພັດທະນາຍ່ອຍ ທີ 2:</u>**

| ແຜນພັດທະນາຍ່ອຍ ທີ 2 : ຂອງກົມພາສີ | ການທັນພາສີເປັນທັນສະໄໝ | ຍຸດທະສາດການພັດທະນາການເງິນພາກລັດ (PFDS) ຮອດປີ 2025 | ເປົ້າໝາຍ PFDS |
|---|---|---|---|
| **ໜ້າວຽກຈຸດສຸມ 2.1** | ການພັດທະນາລະບົບ ເພື່ອຄຸ້ມຄອງການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານ ຂອງຂະແໜງພາສີ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ. | **ຍຸດທະສາດທີ 7:** ພັດທະນາຂະແໜງການເງິນ ເປັນທັນສະ ໄໝ ທຽບທັນພາກພື້ນ ແລະ ສາກົນ | ແນໃສ່ ພັດທະນາລະບົບ ແລະ ນຳໃຊ້ເຄື່ອງມືທີ່ທັນສະໄໝ ເພື່ອຄຸ້ມຄອງການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍງົບປະມານໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ; ທັນກົນໄກການຄຸ້ມຄອງ ວຽກງານວິຊາສະເພາະຂອງຂະແໜງການເງິນໄປທັນສະໄໝຮອບດ້ານທຽບທັນກັບພາກພື້ນ. |
| **ໜ້າວຽກຈຸດສຸມ 2.2** | ທັນກົນໄກການຄຸ້ມຄອງ ວຽກງານວິຊາສະເພາະຂອງຂະແໜງພາສີ ໃຫ້ທັນສະໄໝຮອບດ້ານ ສາມາດເຊື່ອມໂຍງກັບພາກພື້ນ | | |

ລັດຖະການພາສີ ໃນໄລຍະເຊື່ອມໂຍງກັບສາກົນ ມີພັນທະໜ້າທີ່ ໃນການບັງຄັບໃຊ້ກົດໝາຍ ແລະ ອຳນວຍຄວາມສະດວກ ທາງດ້ານການຄ້າ ເພື່ອຮັບປະກັນປະຕິບັດ ສອງໜ້າທີ່ຍຸດທະສາດດັ່ງກ່າວ ຈຶ່ງມີຄວາມຈຳເປັນ ໃນການນຳໃຊ້ເຄື່ອງມືທີ່ທັນສະໄໝ ແລະ ລະບົບອີເລັກໂທຼນິກ. ປະຈຸບັນ ລັດຖະການພາສີ ໄດ້ມີການພັດທະນາ ແລະ ນຳໃຊ້ເຄື່ອງມື ແລະ ລະບົບທີ່ທັນສະໄໝ ເປັນຕົ້ນ ລະບົບການແຈ້ງພາສີອີເລັກໂທຼນິກ (ອາຊີກູດາ), ລະບົບການຊາລະເງິນແບບອີເລັກໂທຼນິກ (Smart Tax), ເຄື່ອງມືສາຍແສງ (Scanner) ແຕ່ລະບົບດັ່ງກ່າວ ກໍ່ຍັງບໍ່ທັນຄວບຄຸມການດຳເນີນງານຂອງວຽກງານພາສີ ໄດ້ທັງໝົດ, ຍັງມີຫລາຍລະບົບທີ່ຈຳເປັນຕ້ອງໄດ້ສືບຕໍ່ພັດທະນາ ເຊັ່ນ ລະບົບບໍລິການແຈ້ງພາສີປະຕູ

ດຽວ, ລະບົບບໍລິຫານຄວາມສ່ຽງ, ລະບົບກ້ອງວົງຈອນປິດ, ລະບົບການຄຸ້ມຄອງການເຄື່ອນຍ້າຍສິນຄ້າ, ລະບົບການຄຸ້ມຄອງພະນັກງານ, ແລະ ອື່ນໆ.

ນອກຈາກນັ້ນ, ສປປ ລາວ ຍັງມີພັນທະ ໃນການຈັດຕັ້ງປະຕິບັດ ບັນດາສົນທິສັນຍາ, ຂໍ້ຕົກລົງ, ແລະ ແຜນງານທີ່ໄດ້ຮ່ວມລົງນາມໃນລະດັບພາກພື້ນ ແລະ ສາກົນ ເຊັ່ນ: ການເຊື່ອມໂຍງກັບລະບົບການແຈ້ງພາສີປະຕູດຽວອາຊຽນ, ການຈັດຕັ້ງປະຕິບັດລະບົບຄຸ້ມຄອງການຂົນສົ່ງສິນຄ້າຜ່ານແດນອາຊຽນ (ACTS), ການດຳເນີນແຜນງການ ຜູ້ປະກອບການມາດຕະຖານເອອີໂອ ໃນປີ 2019.

| ໜ້າວຽກຈຸດສຸມ ຂອງ ແຜນພັດທະນາຍ່ອຍ ທີ 2 | 2019 | 2020 |
|---|---|---|
| **2.1** ການພັດທະນາລະບົບ ເພື່ອຄຸ້ມຄອງການເກັບລາຍຮັບ ຂອງຂະແໜງພາສີ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ. | | |
| 2.1.1 ຕິດຕັ້ງ ແລະ ນຳໃຊ້ ລະບົບແຈ້ງພາສີປະຕູດຽວ (LNSW) ໃຫ້ກວມເອົາການອອກອະນຸຍາດຂອງບັນດາຂະແໜງການລັດທີ່ກ່ຽວຂ້ອງຢ່າງໜ້ອຍ 4 ຂະແໜງ ການຕົ້ນຕໍຄື: ອຸດສະຫະກຳ ແລະ ການຄ້າ, ສາທາລະນະສຸກ, ກະສິກຳ ແລະ ປ່າໄມ້, ຂົນສົ່ງ ແລະ ໂຍທາ. | x | x |
| 2.1.2 ພັດທະນາ ແລະຕິດຕັ້ງລະບົບກ້ອງວົງຈອນປິດ ຢູ່ບັນດາດ່ານພາສີສາກົນໃນຂອບເຂດທົ່ວປະເທດ | x | x |
| 2.1.3 ພັດທະນາ ແລະ ຕິດຕັ້ງ ລະບົບການຈັດເກັບຄ່າທຳນຽມຜູ້ໂດຍສານ ແລະ ພາຫະນະ ແບບອີເລັກໂຕຼນິກ ຜ່ານລະບົບທະນາຄານ ຢູ່ບັນດາດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ. | x | x |
| 2.1.4 ພັດທະນາ ແລະ ຕິດຕັ້ງລະບົບ ຄຸ້ມຄອງພາຫະນະ ທີ່ນຳເຂົ້າມາ ທ່ອງທ່ຽວຢ້ຽມຢາມ (D53) ຢູ່ບັນດາດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ. | x | x |
| 2.1.5 ປັບປຸງລະບົບຕິດຕາມ ການນຳເຂົ້າ ແລະ ການຈຳໜ່າຍ ນໍ້າມັນເຊື້ອໄຟ (E-meter) ເພື່ອຕິດຕັ້ງໃສ່ບັນດາສາງເກັບມ້ຽນນໍ້າມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ. | x | x |
| 2.1.6 ພັດທະນາ ແລະ ນຳໃຊ້ ລະບົບເວັບໄຊ ຂອງກົມພາສີ ເພື່ອເປັນເຄື່ອງມືໃນການເຜີຍແຜ່ ຂໍ້ມູນຂ່າວສານ ຂອງລັດຖະການພາສີ ຕໍ່ສັງຄົມ. | x | x |
| 2.1.7 ພັດທະນາ ແລະ ນຳໃຊ້ລະບົບຄຸ້ມຄອງແຜນນຳເຂົ້າ (Master List) ຂອງບັນດາໂຄງການ ແລະ ວິສະຫະກິດ ລົງທຶນ ພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ. | x | x |
| 2.1.8 ພັດທະນາ ແລະ ນຳໃຊ້ ລະບົບຄຸ້ມຄອງ ການດຳເນີນຄະດີທາງພາສີ (n Cen ຂອງອົງການພາສີໂລກ ) ເພື່ອເຮັດໃຫ້ວຽກງານດັ່ງກ່າວ ລວມສູນໃນຂອບເຂດທົ່ວປະເທດ. | x | x |
| 2.1.9 ພັດທະນາ ແລະ ເຊື່ອມໂຍງລະບົບແຈ້ງພາສີປະຕູດຽວອາຊຽນ (ASW) ເຂົ້າກັບລະບົບຄຸ້ມຄອງ ການອອກໃບຢັ້ງຢືນແຫຼ່ງກຳເນີດ (E-CO) ຂອງຂະແໜງອຸດສະຫະກຳການຄ້າ ແລະ ສາມາດເຊື່ອມຕໍ່ເຂົ້າກັບລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW). | x | x |
| 2.1.10 ພັດທະນາລະບົບ ການຄຸ້ມຄອງຂໍ້ມູນການຂົນສົ່ງສິນຄ້າ (Manifest) ໃຫ້ເຊື່ອມຕໍ່ກັບລະບົບການແຈ້ງພາສີອາຊີກູດາ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງກວດກາສິນຄ້າ ນຳເຂົ້າ ສົ່ງອອກ ຜ່ານດ່ານພາສີ ໃນຂອບເຂດທົ່ວປະເທດ. | x | x |
| 2.1.11 ນຳໃຊ້ລະບົບເຄື່ອງມືທັນສະໄໝເພື່ອຄຸ້ມຄອງການເຄື່ອນຍ້າຍສິນຄ້າຜ່ານແດນສາກົນຕາມອະນຸສັນຍາການຂົນສົ່ງສິນຄ້າຜ່ານແດນອາຊຽນ (ລະບົບ Asean Customs Transit System) | x | x |
| 2.1.12 ນຳໃຊ້ໂປຼແກມວິເຄາະຖານຂໍ້ມູນຄວາມສ່ຽງດ້ານລາຄາ ເພື່ອຮັບປະກັນຄວາມຖືກຕ້ອງຂອງການກຳນົດມູນຄ່າແຈ້ງພາສີ. | x | x |

| | | |
|---|---|---|
| **2.2 ຫັນກົນໄກການຄຸ້ມຄອງ ວຽກງານວິຊາສະເພາະຂອງຂະແໜງພາສີ ໃຫ້ທັນສະໄໝຮອບດ້ານ ສາມາດເຊື່ອມໂຍງກັບພາກພື້ນ** | | |
| 2.2.1 ຈັດຕັ້ງປະຕິບັດແຜນງານ ຜູ້ປະກອບການມາດຕະຖານເອອີໂອ (Authorized Economic Operator). | x | x |
| 2.2.2 ປັບປຸງ ຂັ້ນຕອນການແຈ້ງພາສີ ໂດຍແບ່ງຂັ້ນຄຸ້ມຄອງ ລະຫວ່າງ ກອງຄຸ້ມຄອງພາສີ, ກອງກວດກາພາສີ, ແລະ ດ່ານພາສີຊາຍແດນ. ໃນນັ້ນ, ກອງຄຸ້ມຄອງພາສີ ຮັບຜິດຊອບ ວຽກງານການແຈ້ງພາສີ ການຈັດເກັບລາຍຮັບ, ດ່ານພາສີຊາຍແດນ ຮັບຜິດຊອບ ຄຸ້ມຄອງ ສາງ ແລະ ກວດກາສິນຄ້າ. | | x |
| 2.2.3 ສ້າງໜ່ວຍບໍລິການທາງພາສີ (Customs Service Unit) ຢູ່ກົມພາສີ ເພື່ອດໍາເນີນການແຈ້ງພາສີ ສໍາລັບສິນຄ້າຮີບດ່ວນ, ໃຫ້ຄໍາແນະນໍາດ້ານວິຊາສະເພາະພາສີ, ແລະ ຮັບຊໍາລະຄ່າພາສີ-ອາກອນ ໂດຍຜ່ານເຄື່ອງມືຂອງທະນາຄານ (Smart Tax) | | x |

❖ **<u>ແຜນພັດທະນາທີ 3:</u>** ການຮ່ວມມືພາຍໃນ ແລະ ຕ່າງປະເທດ ໃນລັກສະນະແບບມີຈຸດສຸມ ແນໃສ່ເພື່ອເຮັດໃຫ້ກົດໝາຍ ແລະ ລະບຽບການພາສີ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີລັກສະນະກົມກຽວ ກັບຂະແໜງການອື່ນໆ.

- **<u>ເປົ້າໝາຍ:</u>**

  ແນໃສ່ເພື່ອເພີ່ມທະວີ ການປະສານສົມທົບ ກັບຂະແໜງການກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ, ການຮ່ວມມືກັບຕ່າງປະເທດ ພາກພື້ນ ແລະສາກົນ, ແລະ ການແລກປ່ຽນຂໍ້ມູນຂ່າວສານກັບພາກທຸລະກິດ ເພື່ອສ້າງເງື່ອນໄຂອໍານວຍຄວາມສະດວກ ການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການຂອງ ສປປ ລາວ ແລະ ສາກົນ ທີ່ຕິດພັນກັບຂົງເຂດວຽກງານພາສີ ໃຫ້ໄດ້ຮັບຜົນສໍາເລັດຕາມຄາດໝາຍ.

- **<u>ແຜນວຽກຈຸດສຸມ ຂອງແຜນພັດທະນາຍ່ອຍ ທີ 3:</u>**

| ແຜນພັດທະນາຍ່ອຍ ທີ 3 ຂອງກົມພາສີ | ການຮ່ວມມື ພາຍໃນ ແລະ ຕ່າງປະເທດ. | ຍຸດທະສາດການພັດທະນາການເງິນພາກລັດ (PFDS) ຮອດປີ 2025 | ເປົ້າໝາຍ PFDS |
|---|---|---|---|
| **ໜ້າວຽກຈຸດສຸມ 3.1** | ເພີ່ມທະວີ ການຮ່ວມມືກັບ ຂະແໜງ ການພາກລັດທີ່ກ່ຽວຂ້ອງ ແລະ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ. | **ຍຸດທະສາດທີ 9 :** ເຊື່ອມໂຍງການເງິນຕ່າງປະເທດ ແລະ ການຮ່ວມມືສາກົນ | ແນໃສ່ ຜັນຂະຫຍາຍແນວທາງການຕ່າງປະເທດຂອງ ສປປ ລາວ ຢ່າງສະເໝີຕົ້ນສະເໝີປາຍ ແລະ ປະຕິບັດນະໂຍບາຍເປີດກວ້າງການຮ່ວມມືແບບຫລາຍທິດ, ຫລາຍຝ່າຍ, ຫລາຍຮູບການ ເພື່ອຍາດແຍ່ງຜົນປະໂຫຍດທາງດ້ານເສດຖະກິດ-ການເງິນ, ເປັນເຈົ້າການເຂົ້າຮ່ວມຢ່າງຕັ້ງໜ້າໃນການປະຕິບັດພັນທະໃນການເຊື່ອມໂຍງກັບເສດຖະກິດ-ການເງິນພາກພື້ນ ແລະ ສາກົນ ເຊັ່ນ: ໃນຂອບອາຊຽນ, ອາຊຽນກັບຄູ່ເຈລະຈາ, ໃນຂອບອາເຊັມ ແລະ ອື່ນໆ. |
| **ໜ້າວຽກຈຸດສຸມ 3.2** | ເພີ່ມທະວີ ການມີສ່ວນຮ່ວມຂອງພາກທຸລະກິດ ໃນການປັບປຸງຂັ້ນຕອນການດໍາເນີນງານຂອງພາສີ. | | |
| **ໜ້າວຽກຈຸດສຸມ 3.3** | ເພີ່ມທະວີ ການຮ່ວມມືກັບບັນດາປະເທດແລະອົງການຈັດຕັ້ງສາກົນ. | | |

ພາລະບົດບາດ ແລະ ໜ້າທີ່ຂອງຂະແໜງການພາສີ ແມ່ນຮັບຜິດຊອບ ການຄຸ້ມຄອງສິນຄ້ານຳເຂົ້າ, ສົ່ງອອກ ແລະ ການເຄື່ອນຍ້າຍຜ່ານແດນ ຊຶ່ງວຽກງານດັ່ງກ່າວ ແມ່ນຕິດພັນກັບ ຫລາຍໆຂະແໜງການລັດ ທີ່ກ່ຽວຂ້ອງ, ແລະ ບັນດາຂະແໜງການດັ່ງກ່າວກໍ່ມີລະບຽບການ, ຂັ້ນຕອນ, ແລະ ມາດຕະການ ທີ່ຕິດພັນກັບການຄຸ້ມຄອງສິນຄ້ານຳເຂົ້າ, ສົ່ງອອກ ແລະ ການເຄື່ອນຍ້າຍຜ່ານແດນ ເຊັ່ນດຽວກັນ. ສະນັ້ນ, ໃນເງື່ອນໄຂການອຳນວຍຄວາມສະດວກທາງດ້ານການຄ້າ ວຽກງານການປະສານສົມທົບກັບຂະແໜງການລັດທີ່ກ່ຽວຂ້ອງ ແມ່ນມີຄວາມຈຳເປັນ ຢ່າງພາວະວິໄສ, ເພື່ອແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ຕາມພາລະບົດບາດຂອງໃຜລາວ ທີ່ກົດໝາຍ ແລະ ລະບຽບການໄດ້ກຳນົດໄວ້ ໃຫ້ມີຄວາມກົມກຽວ ແລະ ເປັນເອກະພາບກັນ ຫລີກເວັ້ນບໍ່ສ້າງກົນໄກ ຫລື ຂັ້ນຕອນ ຊ້ຳຊ້ອນກັນ.

ໃນເງື່ອນໄຂທີ່ ລັດຖະການພາສີ ສປປ ລາວ ເປັນສະມາຊິກຂອງອົງການພາສີໂລກ ແລະ ເຂົ້າຮ່ວມແຜນປະຕິບັດງານຂອງພາສີອາຊຽນ, ຊຶ່ງມີພັນທະ ຕ້ອງໄດ້ປະຕິບັດຕາມຖະແຫລງການ ແລະ ແຜນງານ ກ່ຽວກັບ ສ້າງເວທີເປີດໂອກາດໃນການແລກປ່ຽນຂໍ້ມູນຂ່າວສານ ກັບ ພາກທຸລະກິດ ຢ່າງເປັນປະຈຳ ເພື່ອຮັບຟັງ ຄຳຄິດຄຳເຫັນ, ຂໍ້ສະເໜີແລ້ວນຳມາຄົ້ນຄວ້າ ປັບປຸງ ແກ້ໄຂ. ເພື່ອຮັບປະກັນການຈັດຕັ້ງປະຕິບັດ ບັນດາສົນທິສັນຍາ, ອານຸສັນຍາ, ຂໍ້ຕົກລົງ, ແລະ ບົດບັນທຶກຄວາມເຂົ້າໃຈຕ່າງໆ ທີ່ສ ປປລາວ ຮ່ວມລົງນາມ ແລະ  ເຂົ້າເປັນພາຄີ, ກົມພາສີ ຕ້ອງໄດ້ເພີ່ມທະວີການຮ່ວມມືກັບລັດຖະການພາສີ ຂອງພາກພື້ນ ແລະ ສາກົນ ແນໃສ່ເພື່ອຍາດແຍ່ງເອົາຜົນປະໂຫຍດ ສູງສຸດ ໃນການຈັດຕັ້ງປະຕິບັດ ສົນທິສັນຍາ ອານຸສັນຍາຕ່າງໆ ມາໃຫ້ ສປປ ລາວ.

| **ໜ້າວຽກຈຸດສຸມ ຂອງ ແຜນພັດທະນາຍ່ອຍ ທີ 3** | **2019** | **2020** |
|---|---|---|
| **3.1 ເພີ່ມທະວີ ການຮ່ວມມືກັບ ຂະແໜງການພາກລັດທີ່ກ່ຽວຂ້ອງ ແລະປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ.** | | |
| 3.1.1 ສ້າງກົນໄກ ການປະສານສົມທົບ ກັບພາກສ່ວນລັດທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ແລະ ລະບຽບການ ກ່ຽວຂ້ອງໃຫ້ເປັນ ເອກະພາບ ແລະ ກົມກຽວ ຢ່າງເປັນປົກກະຕິ. | x | x |
| 3.1.2 ສ້າງກົນໄກ ການປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ພະນັກງານພາສີ ທີ່ເຄື່ອນໄຫວຢູ່ແຕ່ລະທ້ອງຖິ່ນຢ່າງເປັນປົກກະຕິ. | x | x |
| **3.2 ເພີ່ມທະວີ ການມີສ່ວນຮ່ວມຂອງພາກທຸລະກິດ** | | |
| 3.2.1 ສ້າງກົນໄກ ການຮ່ວມມື, ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ລະຫວ່າງລັດຖະການພາສີ ແລະ ພາກທຸລະກິດ ເປັນປົກກະຕິ ເພື່ອເຜີຍແຜ່ຂໍ້ມູນຂ່າວສານ, ບັນດາລະບຽບການທາງພາສີ ແລະ ນະໂຍບາຍພັດທະນາວຽກງານພາສີ; ຮັບຟັງຄຳຄິດເຫັນ ແລະ ການສະເໜີຂອງພາກທຸລະກິດ ເພື່ອນຳໄປຄົ້ນຄວ້າ ແລະ ປັບປຸງແກ້ໄຂເປັນແຕ່ລະໄລຍະ. | x | x |
| **3.3 ເພີ່ມທະວີ ການຮ່ວມມືກັບພາກພື້ນ ແລະ ສາກົນ** | | |
| 3.3.1 ອອກບົດແນະນຳກົມພາສີ ເພື່ອຜັນຂະຫຍາຍບັນດາສົນທິສັນຍາ, ອະນຸສັນຍາ, ຂໍ້ຕົກລົງ ແລະ ບົດບັນຄວາມເຂົ້າໃຈ ຕ່າງໆ ທີ່ ສປປ ລາວ ຮ່ວມລົງນາມ ແລະ ເຂົ້າເປັນພາຄີ ເປັນຕົ້ນແມ່ນ: ສັນຍາຂົນສົ່ງສິນຄ້າຜ່ານແດນອາຊຽນ **(AFAFGIT)**, ສັນຍາຂົນສົ່ງຜ່ານແດນຂອງອະນຸພາກພື້ນລຸ່ມແມ່ນ້ຳຂອງ **(GMS CBTA)**, ສົນທິສັນຍາສາກົນວ່າດ້ວຍລະບຽບການແຈ້ງພາສີ **(WCO RKC)**, ຂໍ້ຕົກລົງວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າຂອງອົງການຄ້າໂລກ**(WTO TFA)**, ຂໍ້ຕົກລົງວ່າດ້ວຍພາສີອາຊຽນ **(ASEAN Customs Agreement)**, ຍຸດທະສາດການເຊື່ອມປະຊາຄົມເສດຖະກິດອາຊຽນ **(AEC)** ຊຶ່ງຕິດພັນກັບຂະແໜງພາສີ ເຊັ່ນ: ການເຊື່ອມໂຍງລະບົບປະຕູດຽວອາຊຽນ **(ASW)** ແລະ ໂຄງການຜູ້ປະກອບການມາດຕະຖານເອອີໂອ **(AEO)**. | x | x |

❖ **<u>ແຜນພັດທະນາຍ່ອຍ ທີ 4:</u>** ການສ້າງ, ປັບປຸງ ນິຕິກຳ ຂອງຂະແໜງການພາສີ ໃຫ້ມີລັກສະນະຄົບຊຸດ, ສອດຄ່ອງກັບພາກພື້ນ ແລະ ສາກົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຮັບປະກັນຄວາມເຂັ້ມແຂງໃຫ້ ແກ່ການປະຕິບັດມາດຕະການບັງຄັບໃຊ້ກົດໝາຍ ໃຫ້ມີຄວາມສັກສິດ, ຍຸດຕິທຳ ແລະ ໂປ່ງໃສ ແນໃສ່ສ້າງເງື່ອນໄຂໃນການຈັດເກັບລາຍຮັບ ໃຫ້ຖືກຕ້ອງ, ຄົບຖ້ວນ, ທັນເວລາ, ແລະ ປະກອບສ່ວນ ປົກປ້ອງ ຄວາມປອດໄພ ຂອງສັງຄົມ.

- <u>ເປົ້າໝາຍ</u>:

ແນໃສ່ເພື່ອປັບປຸງ ແລະ ສ້າງກົດໝາຍ ລວມທັງ ລະບຽບການຕ່າງໆ ຂອງຂະແໜງການພາສີ ໃຫ້ມີຄວາມຄົບຊຸດ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນໄລຍະໃໝ່ ແລະ ເຊື່ອມໂຍງສາກົນ ກັບພາກພື້ນ ແລະ ສາກົນ ເທື່ອລະກ້າວ. ພ້ອມທັງສິ່ງເສີມການລົງທຶນ, ການຜະລິດ, ການດຳເນີນທຸລະກິດ ຂອງພາກສ່ວນເສດຖະກິດ ພາຍໃນປະເທດ ແລະ ກາຍເປັນເງື່ອນໄຂເຮັດໃຫ້ ມີຖານລາຍຮັບງົບປະມານໃໝ່ ທີ່ໝັ້ນທ່ຽງ, ເພີ່ມທະວີຄວາມສັກສິດ ແລະ ຫັນເຂົ້າສູ່ການປະຕິບັດລະບຽບກົດໝາຍ ເທື່ອລະກ້າວ, ຫລຸດຜ່ອນຊ່ອງວ່າງ ທີ່ເກີດການຮົ່ວໄຫລດ້ານລາຍຮັບ-ລາຍຈ່າຍງົບປະມານ.

- **<u>ແຜນວຽກຈຸດສຸມຂອງແຜນພັດທະນາຍ່ອຍ ທີ 4:</u>**

| ແຜນພັດທະນາ ຍ່ອຍ ທີ 4 ຂອງກົມພາສີ | ການສ້າງ, ປັບປຸງ ນິຕິກຳ ແລະ ວຽກງານບັງຄັບໃຊ້ກົດໝາຍ ເພື່ອຮັບປະກັນ ການຈັດເກັບລາຍຮັບ ຂອງຂະແໜງພາສີ. | ຍຸດທະສາດການພັດທະນາການເງິນພາກລັດ (PFDS) ຮອດປີ 2025 | ເປົ້າໝາຍ PFDS |
|---|---|---|---|
| **ໜ້າວຽກຈຸດສຸມ 4.1** | ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານນິຕິກຳ. | **ຍຸດທະສາດທີ 8**: ສ້າງ ແລະ ປັບປຸງ ນິຕິກຳ ຂະແໜງການເງິນໃຫ້ຄົບຊຸດແລະສອດຄ່ອງກັບຍຸກສະໄໝ.<br><br>**ຍຸດທະສາດທີ 2:** ທົບທວນນະໂຍບາຍລາຍຮັບ ແລະລະດົມທຶນ ເພື່ອເກັບລາຍຮັບໃຫ້ຄົບຖ້ວນຕາມທ່າແຮງບົ່ມຊ້ອນ ແລະ<br>**ຍຸດທະສາດທີ 6:** ພັດທະນາການບັນຊີ ແລະ ການກວດກາ-ກວດການເງິນ ໃຫ້ໜັກ ແໜ້ນເຂັ້ມແຂງ. | ແນໃສ່ເຮັດໃຫ້ຖານລາຍຮັບງົບປະມານໃໝ່ ທີ່ໝັ້ນທ່ຽງ ໜັກແໜ້ນ; ຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ ເຂົ້າສູ່ກົດ ໝາຍແລະລະບຽບການເທື່ອລະກ້າວ; ຫລຸດຜ່ອນຊ່ອງວ່າງ ທີ່ເກີດການຮົ່ວໄຫລດ້ານລາຍຮັບ-ລາຍຈ່າຍງົບປະມານ; ເພີ່ມທະວີຄວາມສັກສິດໃນການປະຕິບັດກົດ ໝາຍ ແລະ ນິຕິກຳດ້ານການເງິນ; ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນໄລຍະໃໝ່ ແລະ ເຊື່ອມໂຍງສາກົນເທື່ອລະກ້າວ ແລະ ພ້ອມທັງສິ່ງເສີມການລົງທຶນ, ການຜະລິດ, ການດຳເນີນທຸລະກິດ ຂອງພາກສ່ວນເສດຖະກິດພາຍໃນປະເທດ.<br><br>ແນໃສ່ເຮັດ ໃຫ້ເກັບລາຍຮັບງົບປະມານ ໃຫ້ຄົບຖ້ວນ ຕາມທ່າແຮງບົ່ມຊ້ອນ ແລະ ລະບຽບ ກົດໝາຍກຳນົດ; ຍົກສູງປະສິດທິພາບ ການຄຸ້ມຄອງເກັບລາຍຮັບ ໃຫ້ສູງກວ່າເກົ່າ ແລະ ອັດຊ່ອງວ່າງການຮົ່ວໄຫລ. |
| **ໜ້າວຽກຈຸດສຸມ 4.2** | ຫັນເຂົ້າສູ່ການປະຕິບັດລະບຽບກົດໝາຍເທື່ອລະກ້າວ | | |

ໃນເງື່ອນໄຂການເຊື່ອມໂຍງກັບສາກົນ, ການປະຕິບັດນະໂຍບາຍສົ່ງເສີມການລົງທຶນ ແລະ ອຳນວຍຄວາມສະດວກທາງດ້ານການຄ້າທີ່ລັດຖະບານໄດ້ກຳນົດອອກ, ເຮັດໃຫ້ ລັດຖະການພາສີ ມີບົດບາດສຳຄັນໃນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ການລົງທຶນ ເພື່ອໃຫ້ບັນລຸໄດ້ຕາມຄາດໝາຍສະຫັດສະວັດ ທີ່ລັດຖະບານໄດ້ກຳນົດໄວ້. ນອກນັ້ນ, ຍັງມີພັນທະ ແລະ ໜ້າທີ່ ໃນການຈັດເກັບລາຍຮັບເຂົ້າງົບປະມານ ໃຫ້ໄດ້ໃນລະດັບຄາດ ໝາຍທີ່ກຳນົດ ໂດຍກະຊວງການເງິນ ເປັນແຕ່ລະໄລຍະ. ສະນັ້ນ, ຈິ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງ ກົດໝາຍພາສີ ເພື່ອໃຫ້ສອດຄ່ອງ ກັບສົນທິສັນຍາ RKC ຂອງອົງການພາສີໂລກ ແລະ ຂໍ້ຕົກລົງວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ TFA ຂອງອົງການການຄ້າໂລກ ທີ່ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ.

ພາຍໃຕ້ເງື່ອນໄຂທີ່ກ່າວມາຂ້າງເທິງດັ່ງກ່າວ ເຮັດໃຫ້ສະພາບການຄ້າ ແລະ ການລົງທຶນ ຢູ່ ສປປ ລາວ ມີລັກສະນະຂະຫຍາຍຕົວເພີ່ມຂຶ້ນ, ໄປຄຽງຄູ່ກັນນັ້ນ, ຍັງມີບາງບຸກຄົນ ຫລື ນິຕິບຸກຄົນ ສວຍໃຊ້ຊ່ອງວ່າງທາງດ້ານກົນໄກການອຳນວຍຄວາມສະດວກ ຂອງພາກສ່ວນລັດ ທີ່ກ່ຽວຂ້ອງ ເພື່ອລັກລອບຊຸກເຊື່ອງ, ເຊື່ອງອຳ ຄ່າພາສີ-ອາກອນ ຕາມລະບຽບກົດໝາຍ ແລະ ເຄື່ອນໄຫວໃນການຄ້າຂາຍສິນຄ້າຜິດກົດໝາຍຕ່າງໆ, ຊຶ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ສະພາບເສດຖະກິດ, ສັງຄົມຂອງ ສປປ ລາວ.

ກົມພາສີ ແມ່ນອົງກອນສືບສວນ-ສອບສວນ ທີ່ກຳນົດໄວ້ໃນກົດໝາຍອາຍາ ຊຶ່ງມີໜ້າທີ່ໃນການເຄື່ອນໄຫວຕ້ານສະກັດກັ້ນ ການລັກລອບໜີພາສີ, ກວດສອບຄືນການແຈ້ງພາສີ ເພື່ອເກັບກູ້ຄືນລາຍຮັບ ທີ່ຖືກເຊື່ອງອຳ. ໃນໄລຍະຜ່ານມາ ການເຄື່ອນໄຫວວຽກງານຕ້ານ ສະກັດກັ້ນ ການລັກລອບໜີພາສີ ຂອງຂະແໜງພາສີ ເຫັນວ່າ ຍັງບໍ່ທັນມີປະສິດທິພາບເທົ່າທີ່ຄວນ, ເນື່ອງຈາກວ່າ ການເຄື່ອນໄຫວ ຍັງບໍ່ທັນລວມສູນ ແລະ ຂາດຍຸດທະສາດໃນການດຳເນີນວຽກງານ ເປັນຕົ້ນ ການວິເຄາະວິໄຈຂໍ້ມູນແຫລ່ງຂ່າວ, ການບໍລິຫານຄວາມສ່ຽງ ແລະການກຳນົດເປົ້າໝາຍການກວດກາ, ຈຶ່ງເຮັດໃຫ້ສະພາບການລັກລອບ ໜີພາສີ ທັງໃນດ່ານ ແລະ ນອກດ່ານ ມີລັກສະນະແຜ່ຫລາຍ, ຊຶ່ງສົ່ງຜົນກະທົບ ຕໍ່ວຽກງານການຈັດເກັບລາຍຮັບ ແລະ ການບັງຄັບໃຊ້ກົດໝາຍ ບໍ່ໄດ້ປະສິດທິຜົນເທົ່າທີ່ຄວນ.

ເພື່ອເຮັດໃຫ້ວຽກງານການບັງຄັບໃຊ້ກົດໝາຍມີຄວາມເຂັ້ມແຂງ ກົມພາສີຕ້ອງໄດ້ປັບປຸງກົງຈັກການຈັດຕັ້ງວຽກງານຕ້ານການສະກັດກັ້ນ ການລັກລອບໜີພາສີ ແລະ ວຽກງານກວດສອບຄືນການແຈ້ງພາສີ ໃຫ້ສາມາດເຄື່ອນໄຫວໄດ້ຢ່າງລວມສູນ ແລະ ມີປະສິດທິພາບ, ພັດທະນາ ແລະ ນຳໃຊ້ ເຄື່ອງມືທີ່ທັນສະໄໝ ແລະ ລະບົບອີເລັກໂຕຼນິກ ເພື່ອຄຸ້ມຄອງ ຂໍ້ມູນແຫລ່ງຂ່າວ, ການວິເຄາະວິໄຈ ຂໍ້ມູນ ແລະ ເປົ້າໝາຍການກວດກາ ໃຫ້ມີຄວາມຊັດເຈນ. ພ້ອມນັ້ນ, ພັດທະນາບຸກຄະລາກອນທີ່ເຮັດວຽກໃນຂົງເຂດດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ເປັນມືອາຊີບ.

ໄປຄຽງຄູ່ກັນນັ້ນ, ກົມພາສີ ຕ້ອງໄດ້ຈັດຕັ້ງປະຕິບັດ ບັນດາສົນທິສັນຍາສາກົນ ທີ່ ສປປ ລາວ ເຂົ້າເປັນພາຄີ ເພື່ອປະກອບສ່ວນພັນທະຮ່ວມກັບສາກົນໃນການປົກປ້ອງ ຄວາມປອດໄພຂອງສັງຄົມ.

| ໜ້າວຽກຈຸດສຸມ ຂອງແຜນພັດທະນາຍ່ອຍ ທີ 4 | 2019 | 2020 |
|---|---|---|
| **4.1 ສ້າງ ແລະ ປັບປຸງ ບັນດານິຕິກຳ ຂອງຂະແໜງພາສີ ໃຫ້ສອດຄ່ອງກັບສະພາບ ການຂະຫຍາຍຕົວ ດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.** | | |
| 4.1.1 **ປັບປຸງກົດໝາຍວ່າດ້ວຍພາສີ** | x | x |
| 4.1.2 **ປັບປຸງ ແລະ ສ້າງ ບັນດານິຕິກຳລຸ່ມກົດໝາຍທີ່ຈຳເປັນ ເປັນຕົ້ນ :** ຄຳແນະນຳກະຊວງການເງິນ ຜັນຂະຫຍາຍກົດໝາຍພາສີ ສະບັບປັບປຸງ, ລັດຖະບັນຍັດວ່າດ້ວຍອັດຕາພາສີຂາອອກ, ລັດຖະບັນຍັດປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ຕິດພັນກັບຂະແໜງພາສີ, ການບໍລິການແຈ້ງພາສີປະຕູດຽວ, ການຄຸ້ມຄອງຜູ້ປະກອບການມາດຕະຖານເອອີໂອ, ການຄຸ້ມຄອງຜູ້ບໍລິການແຈ້ງພາສີ, ການຂົນສົ່ງຜ່ານແດນສາກົນ, ການນຳເຂົ້າເພື່ອສົ່ງອອກຕໍ່, ການຄຸ້ມຄອງສິນຄ້າເຄື່ອງຂອງຜ່ານດ່ານທ້ອງຖິ່ນ ແລະ ປະເພນີ. | x | x |

| | | |
|---|---|---|
| 4.1.3 ອອກຂໍ້ຕົກລົງ ກະຊວງການເງິນ ສ້າງຕັ້ງພະແນກສືບສວນ-ສອບສວນການລັກລອບໜີພາສີ ເພື່ອປ່ຽນແທນ ພະແນກຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ. | x | |
| **4.2 ການປະຕິບັດມາດຕະການບັງຄັບໃຊ້ກົດໝາຍ** | | |
| 4.2.1 ປັບປຸງການເຄື່ອນໄຫວວຽກງານ ສືບສວນ-ສອບສວນ ແລະ ການປາບປາມການລັກລອບໜີພາສີ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດເຄື່ອນໄຫວ ລວມສູນ ທັງບຸກຄະລາກອນ ແລະ ວຽກງານວິຊາສະເພາະ ໃນຂອບເຂດທົ່ວປະເທດ, ນອກນັ້ນ, ຕ້ອງໄດ້ສົມທົບກັບເຈົ້າໜ້າທີ່ຂະແໜງການກ່ຽວຂ້ອງ ໃນການຄຸ້ມຄອງ ກວດກາ ສາງສິນຄ້າປາຍທາງ ຕາມລະບຽບການ ແນໃສ່ເພື່ອຈຳກັດຊ່ອງວ່າງ ໃນການລັກລອບໜີພາສີ ແລະ ສ້າງທ່າແຮງໃນການຈັດເກັບລາຍຮັບ. | x | x |
| 4.2.2 ປັບປຸງການເຄື່ອນໄຫວ ວຽກງານກວດສອບຄືນການແຈ້ງພາສີ ໃຫ້ມີຄວາມເຂັ້ມແຂງ ໂດຍສຸມໃສ່ກວດສອບບັນດາບໍລິສັດ, ສິນຄ້າເຄື່ອງຂອງ ທີ່ມີຄວາມສ່ຽງ ຕໍ່ການຈັດເກັບລາຍຮັບ ເປັນຕົ້ນ: ນໍ້າມັນເຊື້ອໄຟ, ພາຫະນະ, ວັດສະດຸກໍ່ສ້າງ, ເຄື່ອງໃຊ້ໄຟຟ້າ ແລະ ອື່ນໆ. | x | x |
| 4.2.3 ສ້າງກົນໄກການສົມທົບກັບເຈົ້າໜ້າທີ່ ຂະແໜງການ ກ່ຽວຂ້ອງ ໃນການຄຸ້ມຄອງ ການນຳເຂົ້າ ແລະ ສົ່ງອອກສິນຄ້າ, ເຄື່ອງຂອງ ຜ່ານດ່ານທ້ອງຖິ່ນ ແລະ ດ່ານປະເພນີ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ. | x | x |
| 4.2.4 ສ້າງກົນໄກ ແລະ ນຳໃຊ້ເຄື່ອງມືທັນສະໄໝ ສຳລັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ບັນດາຮ້ານຄ້າປອດພາສີ,ເຂດເສດ ຖະກິດພິເສດເພື່ອຈຳກັດຊ່ອງຫວ່າງນຳເອົາສິນຄ້າປອດພາສີເຂົ້າມາຈຳໜ່າຍພາຍໃນ | x | x |
| 4.2.5 ພັດທະນາລະບົບການຄຸ້ມຄອງຂໍ້ມູນແຫລ່ງຂ່າວ ແລະ ການບໍລິຫານຄວາມສ່ຽງ ພາຍໃນ ແລະການເຊື່ອມໂຍງ ກັບຖານຂໍ້ມູນ RILO/AP, CEN, MPI ແລະ ອື່ນໆ ຂອງສາກົນ ເພື່ອສະໜອງສະຂໍ້ມູນທີ່ຖືກຕ້ອງ ໃຫ້ແກ່ການວິໄຈ ແລະ ກຳນົດເປົ້າໝາຍ ການກວດກາຢ່າງຖືກຕ້ອງຊັດເຈນ. | x | x |
| 4.2.6. ການບັງຄັບໃຊ້ກົດໝາຍຕາມສົນທິສັນຍາສາກົນຄື:ສົນທິສັນຍາວ່າດ້ວຍການປົກປ້ອງຊັບສິນທາງປັນຍາ **(WTO TRIPS),** ສົນທິສັນຍາວ່າດ້ວຍການປົກປ້ອງສັດປ່າ ແລະ ພັນພືດໄກ້ສູນພັນ **(CITES),** ແຜນງານການຄວບຄຸມກວດກາຕູ້ສິນຄ້າ **(UNODC-CCU),** ສົນທິສັນຍາວ່າດ້ວຍການຄຸ້ມຄອງສານທຳລາຍຊັ້ນໂອໂຊນ **(ODS),** ສົນທິສັນຍາວ່າດ້ວຍການຄວບຄຸມກຳມັນຕະພາບລັງສີ **(IAEA),**ແຜນງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ **(AML),** ວຽກງານຕ້ານ ແລະ ສະກັດກັ້ນການຄ້າຂາຍ ແລະການເຄື່ອນຍ້າຍຢາເສບຕິດ, ອາວຸດເສິກ. | x | x |

## ພາກທີ V: ວິທີຈັດຕັ້ງປະຕິບັດ, ການຕິດຕາມ, ການປະເມີນຜົນ ແລະ ການລາຍງານ

ເພື່ອຮັບປະກັນການຈັດຕັ້ງປະຕິບັດວິໄສທັດຂອງກະຊວງການເງິນ ຮອດປີ 2030, ກົມພາສີ ຈະຕ້ອງໄດ້ເປັນເຈົ້າການໃນ ການຜັນຂະຫຍາຍ ແຜນພັດທະນາ ຂອງກົມພາສີ ຮອດປີ 2020 ໃຫ້ບັນລຸຕາມເປົ້າ ໝາຍທີ່ວາງໄວ້, ໂດຍທຸກພາກສ່ວນ ນັບແຕ່ສູນກາງ ລົງຮອດທ້ອງຖິ່ນຂອງຂະແໜງພາສີ ໃນຂອບເຂດທົ່ວປະເທດ ຈະຕ້ອງມີພັນທະປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ, ມີການປະສານງານຢ່າງເລິກເຊິ່ງ ແລະ ກົມກຽວ, ມີການແບ່ງຄວາມຮັບຜິດຊອບໃຫ້ຈະແຈ້ງ, ມີມາດຕະການຕິດຕາມ, ກວດກາ ແລະ ປະເມີນຜົນ ເປັນແຕ່ລະໄລຍະ, ຊຶ່ງມີສາມາດສັງລວມໄດ້ດັ່ງນີ້:

### 1. ມາດຕະການຈັດຕັ້ງປະຕິບັດ

ກົມພາສີ ຈະອອກຄຳສັ່ງແນະນຳ ການຈັດຕັ້ງປະຕິບັດ ວິໄສທັດ ແລະ ແຜນພັດທະນາ ຂະແໜງພາສີ ແຕ່ປີຮອດປີ 2020 ໂດຍສະເພາະບົດແນະນຳກ່ຽວກັບ ການສ້າງແຜນດຳເນີນງານປະຈຳປີ ເພື່ອຜັນຂະຫຍາຍເອກະສານສະບັບນີ້ ໃຫ້ເປັນອັນລະອຽດ ນັບແຕ່ ລັດຖະການພາສີຂັ້ນສູນກາງ ລົງຮອດທ້ອງຖິ່ນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ.

ທຸກພາກສ່ວນຂອງລັດຖະການພາສີ ມີພັນທະ ແລະ ໜ້າທີ່ ໃນການເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດແຜນໜ້າວຽກຈຸດສຸມ ຂອງແຜນພັດທະນາ ສະບັບນີ້ ໂດຍໃຫ້ມີການສ້າງແຜນກິດຈະກຳລະອຽດ, ກຳນົດຕົວຊີ້ວັດ ຄາດໝາຍດ້ານປະລິມານ ແລະ ເວລາໃຫ້ຊັດເຈນ, ມີການລະບຸ ການແບ່ງຄວາມຮັບຜິດຊອບຈະແຈ້ງ ໃຫ້ສາມາດຕິດຕາມ ແລະ ປະເມີນຜົນໄດ້, ກຳນົດງົບປະມານ ແລະ ມາດຕະການຈັດຕັ້ງປະຕິບັດລະອຽດ ເພື່ອຮັບປະກັນຄວາມສອດຄ່ອງ ແລະ ກົມກຽວໃນຂອບເຂດທົ່ວປະເທດ.

ເພື່ອຮັບປະກັນດ້ານແຫລ່ງທຶນ ໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້, ກົມພາສີ ຈະນຳສະເໜີ ຕໍ່ບັນດາຄູ່ຮ່ວມພັດທະນາຕ່າງປະເທດ ໃນກອບ 2 ຝ່າຍ ແລະ ຫລາຍຝ່າຍ ເພື່ອຂໍການຊ່ວຍເຫລືອດ້ານວິຊາການ ຫລື ຂໍແຫລ່ງທຶນ ໃນການຈັດຕັ້ງປະຕິບັດກິດຈະກຳລະອຽດ ຂອງແຜນງານສະບັບນີ້. ນອກຈາກນັ້ນ, ກໍ່ຈະໄດ້ມີການວາງແຜນຈັດບຸລິມະສິດ ງົບປະມານຂອງລັດ ແລະ ຄັງວິຊາການຂອງກົມພາສີ ເພື່ອສຸມໃສ່ການຈັດຕັ້ງປະຕິບັດກິດຈະກຳຂອງແຜນງານສະບັບນີ້ ໃຫ້ບັນລຸ ຕາມາຄາດໝາຍທີ່ວາງໄວ້.

ອີກປັດໃຈໜຶ່ງໃນການຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນງານສະບັບນີ້ ໃຫ້ບັນລຸຜົນ ແມ່ນ ກົມພາສີ ຈະໄດ້ເອົາໃຈໃສ່ຈັດສັນຊັບພະຍາກອນມະນຸດ ແລະ ງົບປະມານ ໃຫ້ສົມຄູ່ ກັບປະລິມານຫນ້າວຽກລາຍລະອຽດຂອງແຜນພັດທະນາສະບັບນີ້ ເພື່ອຮັບປະກັນການປະຕິບັດແຜນງານ ໃຫ້ທັນເວລາ ແລະໄດ້ຮັບໝາກຜົນເປັນຈິງ.

### 2. ການຕິດຕາມ, ປະເມີນຜົນ ແລະ ລາຍງານຜົນການຈັດຕັ້ງປະຕິບັດ

ລັດຖະການພາສີທຸກຂັ້ນ ນັບແຕ່ ຂັ້ນສູນກາງ ລົງຮອດ ທ້ອງຖິ່ນ ຈະເຮັດມີໜ້າທີ່ ເປັນເສນາທິການໃຫ້ແກ່ກົມພາສີ ໃນການ ປະສານງານ ກັບພາກສ່ວນອື່ນໆ ໃນລະບົບສາຍຕັ້ງ-ສາຍຂວາງ ຂອງຂະແໜງການ ແລະ ພາກສ່ວນພາຍນອກ ທີ່ມີສ່ວນພົວພັນ ກັບການຈັດຕັ້ງປະຕິບັດໜ້າວຽກຈຸດສຸມ ຂອງແຜນພັດທະນາ ສະບັບນີ້ ເພື່ອດຳເນີນການຕິດຕາມ, ກວດກາ, ຕີລາຄາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ຢ່າງໃກ້ຊິດ, ແນໃສ່ຮັບປະກັນ ຜົນໄດ້ຮັບຕາມຄາດໝາຍທີ່ກຳນົດໄວ້, ສາມາດແກ້ໄຂຂໍ້ຄົງຄ້າງ ໃຫ້ທັນເວລາ ແລະ ກຳນົດທິດທາງການປັບປຸງ ໃນຕໍ່ໜ້າໃຫ້ແທດເໝາະກັບຕົວຈິງ.

ພ້ອມນີ້, ກົມພາສີ ຈະເອົາໃຈໃສ່ ປະສານງານ ກັບຄູ່ຮ່ວມພັດທະນາຕ່າງປະເທດ ເພື່ອການຊຸກຍູ້ ດ້ານແຫລ່ງທຶນ ໃຫ້ແກ່ການຈັດຕັ້ງປະຕິບັດໜ້າວຽກຈຸດສຸມ ຂອງແຜນພັດທະນາ ສະບັບນີ້.

ກົມພາສີ ມອບຄວາມຮັບຜິດຊອບໃຫ້ແກ່ພະແນກກວດກາພາຍໃນ ເພື່ອຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ແຜນພັດທະນາຂອງຂະແໜງພາສີສະບັບນີ້ ແລ້ວສັງລວມລາຍງານ ຄວາມຄືບໜ້າ ໃຫ້ຫົວໜ້າກົມພາສີ ຊາບເປັນແຕ່ລະໄລຍະ.